# ພຣະທັມເຊຄາຣີຢາ


| | | | | | | |
|---|---|---|---|---|---|---|
| 1 | 2 | 3 | 4 | 5 | 6 | 7 |
| 8 | 9 | 10 | 11 | 12 | 13 | 14 |


## ເຊຄາຣີຢາ

ZECHARIAH

### 1 ເອີ້ນປະຊາຊົນໃຫ້ກັບຄືນ

Israel Urged to Repent

1 ໃນເດືອນທີແປດ ປີທີສອງແຫ່ງຣັຊການດາຣິອຸສ ພຣະຄໍາຂອງພຣະຜູ້ເປັນເຈົ້າຜ່ານມາທາງ ເຊຄາຣີຢາ ບຸດ
ເບເຣຄີຢາຜູ້ເປັນບຸດອິດໂດ ຜູ້ປະກາດພຣະທັມວ່າ,
2 “ພຣະຜູ້ເປັນເຈົ້າຊົງພິໂຣດຕໍ່ບັນພະບຸຣຸດຂອງເຈົ້າທັງຫລາຍເປັນຢ່າງຍິ່ງ
3 ເຫດສັນນັ້ນ ຈົ່ງກ່າວແກ່ເຂົາທັງຫລາຍວ່າພຣະຜູ້ເປັນເຈົ້າຈອມໂຍທາສັ່ງດັ່ງນີ້ວ່າ ຈົ່ງກັບຄືນມາຫາເຮົາ ພຣະ
ຜູ້ເປັນເຈົ້າຈອມໂຍທາກ່າວດັ່ງນີ້ແຫລະ ເຮົາຈະກັບຄືນມາຫາເຈົ້າ ພຣະຜູ້ເປັນເຈົ້າຈອມໂຍທາກ່າວດັ່ງນີ້
ແຫລະ
4 ຢ່າເປັນເຫມືອນປູ່ຍ່າຕາຍາຍຂອງເຈົ້າ ຊຶ່ງບັນດາຜູ້ປະກາດພຣະທັມຄົນກ່ອນໆຮ້ອງບອກເຂົາວ່າ “ພຣະຜູ້
ເປັນເຈົ້າຈອມໂຍທາກ່າວດັ່ງນີ້ວ່າ ຈົ່ງກັບຄືນເສັຽຈາກທາງຊົ່ວຂອງເຈົ້າ ແລະຈາກການກະທໍາທີ່ຊົ່ວຂອງເຈົ້າ
ເຖີດ” ພຣະຜູ້ເປັນເຈົ້າກ່າວວ່າ ແຕ່ເຂົາບໍ່ໄດ້ຍິນ ແລະບໍ່ໄດ້ຟັງເຮົາ
5 ບັນພະບຸຣຸດຂອງເຈົ້າ ເຂົາຢູ່ທີ່ໃດ ພວກຜູ້ປະກາດພຣະທັມ ເຂົາມີຊີວິດຢູ່ເປັນນິດຫລື
6 ແຕ່ຖ້ອຍຄໍາຂອງເຮົາ ແລະກົດເກນຂອງເຮົາ ຊຶ່ງໄດ້ສັ່ງແກ່ຜູ້ປະກາດພຣະທັມຜູ້ຮັບໃຊ້ຂອງເຮົາກໍໄດ້ຕິດຕາມ
ບັນພະບຸຣຸດຂອງເຈົ້າທັນບໍ່ແມ່ນຫລື?” ຈິ່ງເຂົາກັບໃຈແລ້ວກ່າວວ່າ “ພຣະຜູ້ເປັນເຈົ້າຈອມໂຍທາຊົງດໍາຣິວ່າ
ຈະຊົງກະທໍາແກ່ເຮົາປະການໃດ ໃນເຣື່ອງທາງແລະການກະທໍາຂອງເຮົາ ພຣະອົງຊົງກະທໍາແກ່ເຮົາຢ່າງນັ້ນ”

**ນິມິດຂອງຜູ້ປະກາດພຣະທັມ ເຣື່ອງມ້າ**

First Vision: The Horsemen

7 ເມື່ອວັນທີຊາວສີ່ ເດືອນທີສິບເອັດ ຊຶ່ງເປັນເດືອນເຊບັດ (Shebat) ໃນປີທີສອງແຫ່ງຣັຊການດາຣິອຸສ ພຣະ
ຄໍາຂອງພຣະຜູ້ເປັນເຈົ້າຜ່ານມາທາງເຊຄາຣີຢາ ຜູ້ປະກາດພຣະທັມ ບຸດເບເຣຄີຢາຜູ້ເປັນບຸດບຸດໂດ ແລະເຊ
ຄາຣີຢາກ່າວວ່າ,
8 “ໃນກາງຄືນວັນນຶ່ງ ຂ້າພະເຈົ້າໄດ້ຫລຽວເບິ່ງ ແລະເບິ່ງແມ, ມີຊາຍຄົນນຶ່ງຂີ່ມ້າສີແດງ ຢືນຢູ່ຖ້າມກາງຕົ້ນນໍ້າ
ມັນຊຽວທີ່ເດິ່ນຮ່ອມພູໃນເບື້ອງຫລັງທ່ານຜູ້ນັ້ນມີມ້າສີແດງ ສີແສດ ແລະສີຂາວ
9 ແລ້ວຂ້າພະເຈົ້າຈຶ່ງຖາມວ່າ “ນາຍເຈົ້າຂ້າ ເຫລົ່ານີ້ຄືຫຍັງ?” ທູດສວັນທີ່ສົນທະນາກັບຂ້າພະເຈົ້າບອກຂ້າພະ
ເຈົ້າວ່າ “ເຮົາຈະສໍາແດງໃຫ້ເຈົ້າຊາບວ່າ ເຫລົ່ານີ້ຄືຫຍັງ?”
10 ເຫດສັນນັ້ນ ຊາຍທີ່ຢືນຢູ່ຖ້າມກາງຕົ້ນນໍ້າມັນຊຽວຈຶ່ງບອກວ່າ “ເຫລົ່ານີ້ຄືຜູ້ທີ່ພຣະຜູ້ເປັນເຈົ້າຊົງໃຊ້ໃຫ້ໄປ
ທ່ຽວກວດ ຕຣາໂລກ”
11 ແລະເຂົາເຫລົ່ານັ້ນໄດ້ຕອບທູດສວັນຂອງພຣະຜູ້ເປັນເຈົ້າທີ່ຢືນຢູ່ຖ້າມກາງຕົ້ນນໍ້າມັນຊຽວວ່າ “ເຮົາໄດ້ກວດຕ
ຣາໂລກແລ້ວ ເບິ່ງແມ ທັງໂລກກໍາລັງງຽບສງົບຢູ່”

12 ແລ້ວທູດສວັນຂອງພຣະຜູ້ເປັນເຈົ້າກ່າວວ່າ "ຂ້າແດ່ພຣະຜູ້ເປັນເຈົ້າຈອມໂຍທາ ອີກດົນປານໃດ ພຣະອົງຈະ
ຊົງເມດຕາກຸງເຢຣູຊາເລັມ ແລະຫົວເມືອງຂອງຢູດາ ຊຶ່ງພຣະອົງກໍຊົງພິໂຣດມາເຈັດສິບປີແລ້ວພຣະເຈົ້າຂ້າ?"
13 ແລະພຣະຜູ້ເປັນເຈົ້າຊົງຕອບທູດສວັນຜູ້ທີ່ສົນທະນາກັບຂ້າພະເຈົ້າ ເປັນຖ້ອຍຄຳທີ່ປະເສີດ ແລະເລົ້າໂລມໃຈ
14 ທູດສວັນຜູ້ທີ່ສົນທະນາຢູ່ກັບຂ້າພະເຈົ້າຈຶ່ງກ່າວແກ່ຂ້າພະເຈົ້າວ່າ "ຈົ່ງຮ້ອງວ່າ ພຣະຜູ້ເປັນເຈົ້າຈອມໂຍທາ
ກ່າວດັ່ງນີ້ວ່າ ເຮົາມີຄວາມຫວງແຫນກຸງເຢຣູຊາເລັມ ຄືກຸງຊີໂອນເປັນຢ່າງຍິ່ງ
15 ເຮົາພິໂຣດປະຊາຊາດຫລາຍທີ່ຢູ່ຢ່າງສະບາຍໆ ເພາະເມື່ອເຮົາພິໂຣດແຕ່ນ້ອຍ ເຂົາກໍກໍ່ພັຍວິບັດເກີນຂນາດ
16 ພຣະຜູ້ເປັນເຈົ້າຈຶ່ງກ່າວວ່າ ເພາະສະນັ້ນ ເຮົາກັບມາຍັງກຸງເຢຣູຊາເລັມດ້ວຍຄວາມກະຣຸນາ ພຣະຜູ້ເປັນເຈົ້າ
ຈອມໂຍທາກ່າວວ່າ ຈະຕ້ອງສ້າງພຣະວິຫານຂອງເຮົາຂຶ້ນໄວ້ໃນນັ້ນ ແລະຄຶງເຊືອກວັດໄວ້ເຫນືອກຸງເຢຣູຊາ
ເລັມ
17 ຈົ່ງຮ້ອງອີກວ່າ ພຣະຜູ້ເປັນເຈົ້າຈອມໂຍທາກ່າວດັ່ງນີ້ວ່າ ເມືອງຂອງເຮົາຈະຈະເຣີນຮຸ່ງເຮືອງຖ້ວມທົ້ນດ້ວຍ
ຄວາມມັ່ງຄັ່ງອີກ ແລະພຣະເຈົ້າຈະເລົ້າໂລມຊີໂອນ ແລະເລືອກກຸງເຢຣູຊາເລັມໄວ້ອີກຄັ້ງນຶ່ງ"

**ນິມິດຂອງຜູ້ປະກາດພຣະທັມ ເຣື່ອງສິງແລະຊ່າງເຫລັກ**

Second Vision: The Horns and the Smiths

18 ຂ້າພະເຈົ້າເງີຍຫນ້າຂຶ້ນແລເຫັນ ເບິ່ງແມ, ມີສິງສີ່ໂຕ
19 ຂ້າພະເຈົ້າຈຶ່ງຖາມທູດສວັນທີ່ສົນທະນາກັບຂ້າພະເຈົ້າວ່າ, "ເຫລົ່ານີ້ຄືຫຍັງ?" ທ່ານຈຶ່ງຕອບຂ້າພະເຈົ້າວ່າ,
"ເຫລົ່ານີ້ຄືສິງທີ່ທຳໃຫ້ຢູດາ ອິສຣາເອນ ແລະເຢຣູຊາເລັມ ໃຫ້ກະຈັດກະຈາຍໄປ"
20 ແລ້ວພຣະຜູ້ເປັນເຈົ້າຈຶ່ງຊົງສຳແດງໃຫ້ຂ້າພະເຈົ້າເຫັນຊ່າງເຫລັກສີ່ຄົນ
21 ແລະຂ້າພະເຈົ້າຈຶ່ງຖາມວ່າ, "ຄົນເຫລົ່ານີ້ເຮັດຫຍັງກັນ?" ພຣະອົງຊົງຕອບວ່າ, "ສິ່ງເຫລົ່ານີ້ມາຂວິດໃຫ້ຢູດາ
ກະຈັດກະຈາຍໄປ ຈົນບໍ່ມີຜູ້ໃດຍົກຫົວຂຶ້ນໄດ້ອີກ ແລະຊ່າງເຫລົ່ານີ້ມາກະທຳໃຫ້ສິງຢ້ານກົວ ເພື່ອຈະແກວ່ງ
ລົງຊຶ່ງສິງແຫ່ງປະຊາຊາດ ທີ່ຍົກສິງຂອງຕົນມາຂວິດແຜ່ນດິນຢູດາກະທຳໃຫ້ກະຈັດກະຈາຍໄປ"

## 2 ນິມິດຂອງຜູ້ປະກາດພຣະທັມ ເຣື່ອງຄົນທີ່ມີເຊືອກວັດ

Third Vision: The Man with a Measuring Line

1 ຂ້າພະເຈົ້າເງີຍຫນ້າຂຶ້ນແລເຫັນ ເບິ່ງແມ ຊາຍຄົນນຶ່ງມີເຊືອກວັດຢູ່ໃນມື
2 ຂ້າພະເຈົ້າຈຶ່ງຖາມວ່າ, "ທ່ານຈະໄປໃສ?" ເຂົາຈຶ່ງບອກຂ້າພະເຈົ້າວ່າ "ຈະໄປວັດເຢຣູຊາເລັມເບິ່ງວ່າ ກວ້າງ
ເທົ່າໃດ? ຍາວເທົ່າໃດ?"
3 ແລະເບິ່ງແມ ທູດສວັນທີ່ໄດ້ສົນທະນາກັບຂ້າພະເຈົ້າກໍກ້າວອອກໄປ ແລະທູດສວັນອີກອົງນຶ່ງກໍກ້າວອອກໄປ
ພົບກັບທ່ານ
4 ແລະບອກທ່ານວ່າ, "ຈົ່ງແລ່ນ ບອກຊາຍຫນຸ່ມຄົນນັ້ນວ່າ "ຈະມີຄົນມາອາສັຍຢູ່ໃນເຢຣູຊາເລັມເໝືອນກັບຊົນ
ນະບົດທີ່ບໍ່ມີກຳແພງລ້ອມ ເພາະວ່າປະຊາຊົນ ແລະສັດລ້ຽງໃນນັ້ນຈະມີຫລວງຫລາຍ
5 ເພາະວ່າເຮົາຈະເປັນເຫມືອນກຳແພງໄຟລ້ອມນະຄອນນີ້ໄວ້ ພຣະຜູ້ເປັນເຈົ້າກ່າວວ່າ ແລະເຮົາຈະເປັນສັກສີ
ໃນເມືອງນັ້ນ"

Interlude: An Appeal to the Exiles

6 ພຣະຜູ້ເປັນເຈົ້າກ່າວວ່າ " ຈົ່ງຫນີໄປໃຫ້ພົ້ນຈາກເມືອງເຫນືອ ພຣະຜູ້ເປັນເຈົ້າກ່າວວ່າ ເພາະເຮົາໄດ້ແຜ່ພວກ
ເຈົ້າອອກດັ່ງລົມທັງສີ່ທິດຂອງທ້ອງຟ້າ
7 ເຈົ້າຜູ້ທີ່ຢູ່ກັບທິດາຂອງບາບີໂລນ ຈົ່ງຫນີໄປຍັງຊີໂອນ

8 ເມື່ອພຣະຣັສມີຂອງພຣະອົງໃຊ້ເຮົາໃຫ້ໄປຍັງປະຊາຊາດທີ່ປຸ້ນເຈົ້າ (ເພາະວ່າຜູ້ໃດໄດ້ແຕະຕ້ອງເຈົ້າ ກໍໄດ້
ແຕະຕ້ອງແກ້ວພຣະເນດຂອງພຣະອົງ) ພຣະຜູ້ເປັນເຈົ້າຈອມໂຍທາຈຶ່ງກ່າວດັ່ງນີ້ວ່າ
9 "ເບິ່ງແມ, ເຮົາຈະສັ່ນມືຂອງເຮົາເຫນືອເຂົາ ແລະເຂົາຈະເປັນຂອງລູກປຸ້ນໃຫ້ແກ່ບຸກຄົນທີ່ໄດ້ບົວລະບັດເຂົາ"
ແລ້ວເຈົ້າຈະໄດ້ຊາບວ່າພຣະຜູ້ເປັນເຈົ້າຈອມໂຍທາໃຊ້ຂ້າພະເຈົ້າມາ
10 "ໂອ ບຸດຕຣີແຫ່ງຊີໂອນເອີຍ, ຈົ່ງຮ້ອງເພງ ແລະລ່າເລີງເຖີດ ເພາະເຮົາມາ ແລະຈະຢູ່ຖ້າມກາງເຈົ້າທັງຫລາຍ
ພຣະຜູ້ ເປັນເຈົ້າຈອມໂຍທາກ່າວດັ່ງນີ້ແຫລະ
11 ແລະປະຊາຊາດທີ່ຫລວງຫລາຍຈະສົມທົບກັນເຂົ້າເປັນຝ່າຍພຣະຜູ້ເປັນເຈົ້າໃນວັນນັ້ນ ແລະຈະເປັນປະຊາ
ຊົນຂອງເຮົາ ແລະເຮົາຈະຢູ່ຖ້າມກາງເຈົ້າທັງຫລາຍ ແລະເຈົ້າຈະຊາບວ່າພຣະຜູ້ເປັນເຈົ້າຈອມໂຍທາໄດ້ໃຊ້
ເຮົາມາຫາເຈົ້າ
12 ແລະພຣະຜູ້ເປັນເຈົ້າຈະຊົງຮັບຢູດາເປັນມໍຣະດົກ ເປັນສ່ວນຂອງພຣະອົງໃນແຜ່ນດິນບໍຣິສຸດ ແລະຈະເລືອກ
ເຢຣູຊາເລັມໄວ້ອີກຄັ້ງນຶ່ງ"
13 ບັນດາມະນຸດເອີຍ, ຈົ່ງງຽບສງົບຢູ່ຕໍ່ພຣະຜູ້ເປັນເຈົ້າ ເພາະວ່າພຣະອົງຊົງຕື່ນ ແລະສະເດັດຈາກທີ່ປະທັບອັນ
ບໍຣິສຸດຂອງພຣະອົງແລ້ວ

## 3 ນິມິດຂອງຜູ້ປະກາດພຣະທັມ ເຣື່ອງໂຢຊວຍມະຫາປະໂຣຫິດ

Fourth Vision: Joshua and Satan

1 ແລ້ວທ່ານໄດ້ສະແດງໃຫ້ຂ້າພະເຈົ້າເຫັນໂຢຊວຍມະຫາປະໂຣຫິດ ຊຶ່ງຢືນຢູ່ຫນ້າທູດສວັນຂອງພຣະຜູ້ເປັນ
ເຈົ້າ ແລະຊາຕານຢືນຢູ່ຂ້າງຂວາມືຂອງທ່ານ ຈະຟ້ອງທ່ານ
2 ແລະພຣະຜູ້ເປັນເຈົ້າກ່າວກັບຊາຕານວ່າ, "ໂອຊາຕານ ພຣະຜູ້ເປັນເຈົ້າສັ່ງຫ້າມເຈົ້າເຖີດ ພຣະຜູ້ເປັນເຈົ້າຜູ້
ຊົງເລືອກກຸງເຢຣູຊາເລັມໄວ້ ຊົງຫ້າມເຈົ້າເຖີດ ນີ້ບໍ່ແມ່ນດົ້ນຟືນທີ່ອອກມາຈາກໄຟດອກຫລື"
3 ຝ່າຍໂຢຊວຍນັ້ນນຸ່ງເຄື່ອງແຕ່ງກາຍເປື້ອນຢືນຢູ່ຫນ້າທູດສວັນ
4 ແລະທູດສວັນຈຶ່ງບອກຜູ້ທີ່ຢືນຢູ່ຂ້າງຫນ້າທ່ານວ່າ, "ຈົ່ງແກ້ເຄື່ອງແຕ່ງກາຍທີ່ເປື້ອນຈາກທ່ານເສັຽ" ແລະທູດ
ສວັນເວົ້າກັບທ່ານວ່າ, "ເບິ່ງແມ ເຮົາໄດ້ເອົາຄວາມຜິດບາບອອກໄປເສັຽຈາກເຈົ້າແລ້ວ ແລະເຮົາຈະປະດັບ
ຕົວເຈົ້າດ້ວຍເສື້ອຜ້າ

ອັນສະອາດ

5 ແລະຂ້າພະເຈົ້າວ່າ, "ຈົ່ງໃຫ້ເຂົາທັງຫລາຍເອົາຜ້າສະອາດມາປົກຫົວຂອງທ່ານ" ເຂົາຈຶ່ງປົກຜ້າສະອາດ ແລະ
ນຸ່ງເຄື່ອງແຕ່ງກາຍໃຫ້ທ່ານ ແລະທູດສວັນຂອງພຣະຜູ້ເປັນເຈົ້າກໍຢືນຢູ່
6 ແລະທູດສວັນຂອງພຣະຜູ້ເປັນເຈົ້າຈຶ່ງກ່າວແກ່ໂຢຊວຍວ່າ,
7 "ພຣະຜູ້ເປັນເຈົ້າຈອມໂຍທາສັ່ງດັ່ງນີ້ວ່າ, "ຖ້າເຈົ້າດໍາເນີນໃນທົນທາງຂອງເຮົາ ແລະຮັກສາຄໍາກໍາຊັບຂອງ
ເຮົາ ເຈົ້າຈະໄດ້ປົກຄອງວິຫານຂອງເຮົາ ແລະດູແລບໍຣິເວນຂອງເຮົາ ແລະເຮົາຈະໃຫ້ເຈົ້າມີສິດທີ່ຈະເຂົ້າໄປ
ຖ້າມກາງຜູ້ເຫລົ່ານັ້ນທີ່ຢືນຢູ່ທີ່ນີ້
8 ໂອ ໂຢຊວຍມະຫາປະໂຣຫິດ ຈົ່ງຟັງເຖີດ ເຈົ້າແລະສະຫາຍຂອງເຈົ້າຜູ້ທີ່ນັ່ງຢູ່ຂ້າງຫນ້າເຈົ້າ ເພາະຄົນເຫລົ່າ
ນີ້ເປັນລາງດີ ເຮົາຈະນໍາຜູ້ຮັບໃຊ້ຂອງເຮົາມາ ຄື ກິ່ງ (Branch)
9 ເພາະວ່າ ເບິ່ງແມ ພຣະຜູ້ເປັນເຈົ້າຈອມໂຍທາສັ່ງວ່າ ເຮົາຈະສລັກເທິງສີລາຊຶ່ງເຮົາຕັ້ງໄວ້ຫນ້າໂຢຊວຍເປັນສີ
ລາກ້ອນດຽວທີ່ມີເຈັດຫນ້າ ແລະເຮົາຈະຍົກຄວາມຜິດບາບຂອງເມືອງນີ້ອອກເສັຽໃນວັນດຽວ
10 ພຣະຜູ້ເປັນເຈົ້າຈອມໂຍທາສັ່ງວ່າ ໃນວັນນັ້ນເຈົ້າທຸກຄົນຈະເຊີນເພື່ອນບ້ານຂອງເຈົ້າ ໃຫ້ມາໃຕ້ເຄືອອະງຸ່ນ
ແລະໃຕ້ຕົ້ນຫມາກເດື່ອ

## 4 ນິມິດເຣື່ອງ ເຄື່ອງຮອງຕະກຽງ ແລະຕົ້ນຫມາກກອກ

Fifth Vision: The Lampstand and Olive Trees

1 ແລະທູດສວັນທີ່ສົນທະນາກັບຂ້າພະເຈົ້າມາອີກ ແລະປຸກຂ້າພະເຈົ້າເຫມືອນຄົນທີ່ຫາກໍຕື່ນຈາກນອນ

2 ແລະທ່ານຖາມຂ້າພະເຈົ້າວ່າ, "ເຈົ້າເຫັນຫຍັງ?" ຂ້າພະເຈົ້າຕອບວ່າ, "ເບິ່ງແມ, ຂ້າພະເຈົ້າເຫັນເຄື່ອງຮອງ
ຕະກຽງເຮັດດ້ວຍທອງຄຳລ້ວນອັນນຶ່ງມີຊາມຢູ່ທີ່ຍອດ ແລະມີຕະກຽງຢູ່ເທິງນັ້ນເຈັດໜ່ວຍ ແລະມີທໍ່ເຈັດ
ທໍ່ນຳໄປຍັງຕະກຽງ ຊຶ່ງຢູ່ເທິງຍອດນັ້ນໜ່ວຍລະທໍ່

3 ແລະມີຕົ້ນຫມາກກອກເທດສອງຕົ້ນຢູ່ຂ້າງໆ ຢູ່ຂ້າງຂວາຊາມນັ້ນຕົ້ນນຶ່ງ ຢູ່ຂ້າງຊ້າຍຊາມນັ້ນຕົ້ນນຶ່ງ

4 ແລະຂ້າພະເຈົ້າຖາມທູດສວັນຜູ້ທີ່ສົນທະນາກັບຂ້າພະເຈົ້າວ່າ, "ເຈົ້ານາຍເອີຍ ນີ້ຄືຫຍັງ?"

5 ທູດສວັນທີ່ສົນທະນາກັບຂ້າພະເຈົ້າຕອບຂ້າພະເຈົ້າວ່າ, "ນີ້ຄືຫຍັງເຈົ້າບໍ່ຮູ້ຫລື?" ຂ້າພະເຈົ້າຕອບວ່າ, "ນາຍ
ເຈົ້າເອີຍ ຂ້າພະເຈົ້າບໍ່ຮູ້"

6 ແລ້ວທ່ານຈຶ່ງຕອບຂ້າພະເຈົ້າວ່າ, "ນີ້ເປັນພຣະທັມຂອງພຣະຜູ້ເປັນເຈົ້າທີ່ໃຫ້ໄວ້ກັບເຊຣຸບບາເບນວ່າ ບໍ່ແມ່ນ
ດ້ວຍກຳລັງ ບໍ່ແມ່ນດ້ວຍຣິດທານຸພາບ ແຕ່ດ້ວຍວິນຍານຂອງເຮົາ ພຣະຜູ້ເປັນເຈົ້າຈອມໂຍທາກ່າວດັ່ງນີ້
ແຫລະ

7 ໂອ ພູເຂົາໃຫຍ່ ເຈົ້າເປັນຫຍັງຫນໍຕໍ່ຫນ້າເຊຣຸບບາເບນ ເຈົ້າຈະເປັນທີ່ຮາບ ແລະທ່ານຈະນຳສີລາກ້ອນທີ່
ຢູ່ຍອດອອກມາຖ້າມກາງການໂຫ່ຮ້ອງວ່າ "ງາມແທ້ ພຣະວິຫານ ງາມແທ້"

8 ຍິ່ງກວ່ານັ້ນ ພຣະທັມຂອງພຣະຜູ້ເປັນເຈົ້າມາຍັງຂ້າພະເຈົ້າກ່າວວ່າ,

9 "ມືຂອງເຊຣຸບບາເບນໄດ້ວາງຮາກຖານຂອງພຣະວິຫານນີ້ ແລະມືຂອງເຂົາຈະສ້າງໃຫ້ສຳເຣັດ" ແລ້ວເຈົ້າຈຶ່ງ
ຈະຊາບວ່າ ພຣະຜູ້ເປັນເຈົ້າຈອມໂຍທາໄດ້ໃຊ້ຂ້າພະເຈົ້າມາຫາເຈົ້າທັງຫລາຍ

10 ເພາະວ່າຜູ້ໃດທີ່ດູຫມິ່ນວັນແຫ່ງການເລັກນ້ອຍເຮົາຈະຊົມຊື່ນຍິນດີ ແລະຈະໄດ້ເຫັນສາຍດິ່ງທີ່ຢູ່ໃນມືຂອງເຊ
ຣຸບບາເບນ "ທັງເຈັດນີ້ຄືບັນດາພຣະເນດຂອງພຣະຜູ້ເປັນເຈົ້າຊຶ່ງຫລຽວເບິ່ງທົ່ວພິພົບ"

11 ແລ້ວຂ້າພະເຈົ້າຈຶ່ງຖາມວ່າ, "ຕົ້ນຫມາກກອກເທດສອງຕົ້ນທີ່ຢູ່ຂ້າງຂວາແລະຂ້າງຊ້າຍຂອງເຄື່ອງຮອງນັ້ນຄື
ຫຍັງ?"

12 ແລະຂ້າພະເຈົ້າຖາມທ່ານເປັນຄັ້ງທີສອງວ່າ, "ກິ່ງທັງສອງຂອງຕົ້ນຫມາກກອກເທດ ຊຶ່ງຢູ່ຂ້າງທໍ່ທອງຄຳທັງ
ສອງ ຊຶ່ງເທນ້ຳມັນອອກນັ້ນຄືຫຍັງ?"

13 ທ່ານເວົ້າກັບຂ້າພະເຈົ້າວ່າ, "ເຈົ້າບໍ່ຮູ້ຫລື ເຫລົ່ານີ້ຄືຫຍັງ?" ຂ້າພະເຈົ້າຕອບວ່າ, "ເຈົ້ານາຍເອີຍ ຂ້າພະເຈົ້າບໍ່
ຮູ້"

14 ແລ້ວທ່ານຈຶ່ງກ່າວວ່າ, "ທັງສອງນີ້ຄືຜູ້ທີ່ໄດ້ຮັບການເຈີມເປັນຜູ້ຢືນຢູ່ຂ້າງພຣະຜູ້ເປັນເຈົ້າແຫ່ງພິພົບທັງສິ້ນ"

## 5 ນິມິດເຣື່ອງ ຫນັງສືມ້ວນທີ່ເຫາະໄປ

Six Vision: The Lamp stand and Olive Trees

1 ຂ້າພະເຈົ້າເງີຍຫນ້າຂຶ້ນອີກກໍແລເຫັນ ເບິ່ງແມ ຫນັງສືມ້ວນນຶ່ງເຫາະຢູ່ນັ້ນ

2 ທ່ານຈຶ່ງຖາມຂ້າພະເຈົ້າວ່າ, "ເຈົ້າເຫັນຫຍັງ?" ຂ້າພະເຈົ້າຕອບວ່າ, "ຂ້າພະເຈົ້າແລເຫັນຫນັງສືມ້ວນນຶ່ງເຫາະ
ຢູ່ ມັນຍາວຊາວສອກ ແລະກວ້າງສິບສອກ"

3 ແລ້ວທ່ານຈຶ່ງບອກຂ້າພະເຈົ້າວ່າ, "ນີ້ແຫລະ,ເປັນຄຳສາບແຊ່ງທີ່ແຜ່ອອກໄປທົ່ວພື້ນແຜ່ນດິນທັງສິ້ນ ຜູ້ທີ່ເຮັດ
ການໂຈຣະກັມທຸກຄົນຕ້ອງຖືກກຳຈັດ ຕັ້ງແຕ່ນີ້ໄປຕາມຄວາມໃນຫນັງສືມ້ວນນັ້ນ ແລະທຸກຄົນທີ່ສາບານ
ເທັດຈະຕ້ອງຖືກກຳຈັດຕັ້ງແຕ່ນີ້ໄປຕາມທີ່ກຳນົດໄວ້

4 ພຣະຜູ້ເປັນເຈົ້າຈອມໂຍທາສັ່ງວ່າ ເຮົາສົ່ງຄຳສາບນັ້ນອອກໄປ ແລະຄຳນັ້ນຈະເຂົ້າໄປໃນເຮືອນຂອງໂຈນ
ແລະໃນເຮືອນຂອງຄົນທີ່ສາບານເທັດໂດຍອອກນາມຂອງເຮົາ ແລະຄຳນີ້ຈະຄ້າງຄືນຢູ່ໃນເຮືອນ ຜານເຮືອນ
ນັ້ນເສັຽທັງຕົວໄມ້ແລະສີລາ"

**ຜູ້ຍິງໃນກະຕ່າ**

Seven Vision: The Woman in a Basket

5 ທູດສວັນຜູ້ທີ່ສົນທະນາກັບຂ້າພະເຈົ້າວ່າ, "ຈົ່ງເງີຍໜ້າຂຶ້ນເບິ່ງວ່າ ສິ່ງທີ່ອອກໄປນັ້ນຄືຫຍັງ?"
6 ຂ້າພະເຈົ້າຈຶ່ງວ່າ, "ນັ້ນຄືຫຍັງ?" ທ່ານຈຶ່ງຕອບວ່າ, "ນີ້ຄື ກະຕ່າ (Basket) ທີ່ອອກໄປ" ແລະທ່ານຈຶ່ງວ່າ, "ນີ້
ຄືຄວາມຜິດໃນແຜ່ນດິນທັງສິ້ນ"
7 ແລະເບິ່ງແມ, ຝາກະຕ່າທີ່ເຮັດດ້ວຍຂີ້ກົ່ວກໍຖືກຍົກຂຶ້ນ ແລະມີຜູ້ຍິງຄົນນຶ່ງນັ່ງຢູ່ໃນກະຕ່ານັ້ນ
8 ແລະເຂົາກ່າວວ່າ, "ນີ້ຄືຄວາມອະທັມ" ແລະທ່ານກໍຂົ່ມທ້ອນນາງນັ້ນເຂົ້າໄປໃນກະຕ່າ ແລ້ວກໍຂົ່ມຝາທີ່ເຮັດ
ດ້ວຍຂີ້ກົ່ວນັ້ນປິດປາກມັນໄວ້
9 ແລ້ວຂ້າພະເຈົ້າກໍເງີຍໜ້າຂຶ້ນແລເຫັນ ເບິ່ງແມ, ມີຜູ້ຍິງສອງຄົນເດີນອອກມານັ້ນ ມີລົມຢູ່ໃນປີກຂອງນາງ
ນາງມີປີກເໝືອນປີກຂອງນົກກະສາດຳ ແລະນາງກໍຍົກກະຕ່າຂຶ້ນລະຫວ່າງໂລກແລະຟ້າສວັນ
10 ແລ້ວຂ້າພະເຈົ້າຈຶ່ງເວົ້າກັບທູດສວັນຜູ້ທີ່ສົນທະນາກັບຂ້າພະເຈົ້າວ່າ, "ນາງເຫລົ່ານັ້ນຈະນຳກະຕ່າໄປທີ່ໃດ?"
11 ທ່ານຕອບຂ້າພະເຈົ້າວ່າ, "ໄປຍັງແຜ່ນດິນຊີນາ ໄປສ້າງເຮືອນໃຫ້ກະຕ່າ ເມື່ອຕຽມຢ່າງນີ້ເສັດແລ້ວ ນາງ
ເຫລົ່ານັ້ນຈະວາງກະຕ່າໄວ້ເທິງຖານຂອງມັນ"

## 6 ນິມິດເຣື່ອງ ຣົດຮົບສີ່ຄັນ

Eight Vision: Four Chariots

1 ແລະຂ້າພະເຈົ້າໄດ້ເງີຍໜ້າຂຶ້ນອີກຫລຽວເຫັນ ເບິ່ງແມ ມີຣົດຮົບສີ່ຄັນອອກມາລະຫວ່າງພູເຂົາສອງໜ່ວຍ
ພູເຂົາເຫລົ່ານັ້ນເປັນພູເຂົາທອງສຳຣິດ
2 ຣົດຮົບຄັນແຣກທຽມມ້າແດງ ຄັນທີສອງມ້າດຳ
3 ຄັນທີສາມມ້າຂາວ ຄັນທີສີ່ມ້າດ່າງສີເທົາ
4 ແລ້ວຂ້າພະເຈົ້າຈຶ່ງຖາມທູດສວັນຜູ້ທີ່ສົນທະນາກັບຂ້າພະເຈົ້າວ່າ, "ເຈົ້ານາຍເອີຍ ເຫລົ່ານີ້ຄືຫຍັງ?"
5 ແລະທູດສວັນນັ້ນຕອບຂ້າພະເຈົ້າວ່າ, "ເຫລົ່ານີ້ອອກໄປຍັງລົມທັງສີ່ທິດຂອງຟ້າສວັນ ຫລັງຈາກໄດ້ເຂົ້າເຝົ້າ
ພຣະຜູ້ເປັນເຈົ້າແຫ່ງພິພົບທັງສິ້ນແລ້ວ
6 ຣົດຮົບທີ່ທຽມມ້າດຳຕົງໄປຍັງປະເທດເໜືອ ຕົວຂາວຕົງໄປຍັງປະເທດຕາເວັນຕົກ ແລະຕົວສີດ່າງຕົງໄປຍັງ
ປະເທດໃຕ້"
7 ເມື່ອມ້າເຫລົ່ານີ້ອອກໄປ ມັນກໍຮ້ອນໃຈທີ່ຈະອອກໄປ ແລະກວດກາພື້ນພິພົບ ແລະທ່ານກ່າວວ່າ, "ຈົ່ງໄປ ໄປ
ກວດກາພິພົບ" ດັ່ງນັ້ນມ້າເຫລົ່ານັ້ນຈຶ່ງກວດກາພິພົບ
8 ແລ້ວທ່ານຈຶ່ງຮ້ອງບອກຂ້າພະເຈົ້າວ່າ, "ເບິ່ງແມ, ມ້າທີ່ໄປຍັງປະເທດເໜືອນັ້ນໄດ້ກະທຳໃຫ້ຈິດວິນຍານຂອງ
ເຮົາງຽບສງົບນິ່ງໃນປະເທດເໜືອນັ້ນ"

**ນິມິດເຣື່ອງ ການສວມມົງກຸດໃຫ້ໂຢຊວຍເປັນສັນຍາລັກ**

The coronation of the Branch

9 ແລະພຣະຄຳຂອງພຣະຜູ້ເປັນເຈົ້າມາເຖິງຂ້າພະເຈົ້າວ່າ,

10 “ຈົ່ງນຳເອົາ ເຮນດັຍ ໂຕບີຢາ ແລະເຢດັຍຢາ ໄປເສັງຈາກບັນດາຊະເລີຍ ຜູ້ຊຶ່ງກັບມາຈາກບາບີໂລນ ໃນວັນ
ດຽວກັນນັ້ນໄປຍັງເຮືອນຂອງໂຢຊີຢາ ບຸດເຊຟານີຢາ
11 ຈົ່ງເອົາເງິນແລະທອງຄຳເຮັດເປັນມົງກຸດ ແລະສວມເທິງຫົວຂອງໂຢຊວຍ ບຸດເຢໂຮຊາດັກ ມະຫາປະໂຣຫິດ
12 ແລະກ່າວແກ່ເຂົາວ່າ, “ພຣະຜູ້ເປັນເຈົ້າຈອມໂຍທາສັ່ງດັ່ງນີ້ວ່າ “ເບິ່ງແມ ຊາຍຜູ້ທີ່ມີຊື່ວ່າ ກິ່ງ ເພາະທ່ານຈະ
ຈະເຣີນຮຸ່ງເຮືອງໃນສະຖານທີ່ຂອງທ່ານ ແລະຈະສ້າງພຣະວິຫານຂອງພຣະຜູ້ເປັນເຈົ້າ
13 ທ່ານຜູ້ນີ້ແຫລະຈະເປັນຜູ້ສ້າງພຣະວິຫານຂອງພຣະຜູ້ເປັນເຈົ້າ ແລະຈະຮັບກຽດຕິຍົດ ແລະຈະປະທັບ ແລະ
ປົກຄອງຢູ່ເທິງຣາຊບັນລັງຂອງທ່ານ ແລະຈະມີປະໂຣຫິດຜູ້ນຶ່ງຢູ່ຂ້າງພຣະທີ່ນັ່ງຂອງທ່ານ ແລະການຫາລືກັນ
ຢ່າງສັນຕິ ຈະມີຢູ່ລະຫວ່າງທ່ານທັງສອງ”
14 ແລະມົງກຸດນັ້ນຈະຢູ່ໃນພຣະວິຫານຂອງພຣະຜູ້ເປັນເຈົ້າ ເພື່ອໃຫ້ເປັນທີ່ຣະລຶກເຖິງເຮລດັຍ ໂທບີຢາ ເຢດັຍ
ຢາ ແລະໂຢຊີຢາ ບຸດຂອງເຊຟານີຢາ
15 “ບັນດາຜູ້ທີ່ຢູ່ຫ່າງໄກຈະມາຊ່ອຍສ້າງພຣະວິຫານຂອງພຣະຜູ້ເປັນເຈົ້າ ແລະທ່ານທັງຫລາຍຈະຊາບວ່າ ພຣະ
ຜູ້ເປັນເຈົ້າຈອມໂຍທາຊົງໃຊ້ຂ້າພະເຈົ້າມາຍັງທ່ານ ຖ້າທ່ານທັງຫລາຍຈະເຊື່ອຟັງພຣະສຸຣະສຽງຂອງພຣະຜູ້
ເປັນເຈົ້າພຣະເຈົ້າຂອງທ່ານຢ່າງເຄັ່ງຄັດ ສິ່ງນີ້ຈະເປັນໄປດັ່ງກ່າວນັ້ນ”

## 7 ຊົງດຳເນີນການອົດອາຫານຢ່າງບໍ່ຈິງໃຈ

Hypocritical Fasting Condemned

1 ໃນປີທີສີ່ຂອງຣັຊການກະສັດດາຣີອຸສ ພຣະທັມຂອງພຣະຜູ້ເປັນເຈົ້າມາຍັງເຊຄາຣີຢາໃນວັນທີສີ່ເດືອນທີເກົ້າ
ຊຶ່ງເປັນເດືອນຄີສລີວ (Chis’lev)
2 ຝ່າຍເມືອງເບັດເອນໄດ້ໃຊ້ໃຫ້ຊາເຣເຊີ ແລະເຣເກມເມເລກ ພ້ອມກັບພັກພວກຂອງເຂົາໄປທູນຂໍພຣະກະຣຸ
ນາຕໍ່ພຣະຜູ້ເປັນເຈົ້າ
3 ແລະຮ້ອງຂໍຕໍ່ບັນດາປະໂຣຫິດທີ່ພຣະວິຫານແຫ່ງພຣະຜູ້ເປັນເຈົ້າຈອມໂຍທາ ແລະຕໍ່ຜູ້ປະກາດພຣະທັມວ່າ,
“ຄວນທີ່ຂ້າພະເຈົ້າຈະໄວ້ທຸກ ແລະອົດອາຫານໃນເດືອນທີຫ້າ ຢ່າງທີ່ຂ້າພະເຈົ້າໄດ້ກະທຳມາແລ້ວເປັນ
ຫລາຍປີນັ້ນຫລືບໍ?”
4 ແລ້ວພຣະຄຳຂອງພຣະຜູ້ເປັນເຈົ້າຈອມໂຍທາມາຍັງຂ້າພະເຈົ້າວ່າ,
5 “ຈົ່ງກ່າວແກ່ປະຊາຊົນທັງສິ້ນ ແລະແກ່ບັນດາປະໂຣຫິດວ່າ ເມື່ອເຈົ້າທັງຫລາຍອົດອາຫານ ແລະໄວ້ທຸກໃນ
ເດືອນທີຫ້າ ແລະໃນເດືອນທີເຈັດ ຕັ້ງເຈັດສິບປີນັ້ນ ເຈົ້າໄດ້ອົດອາຫານເພື່ອເຮົາຄືເຮົາເອງຫລື
6 ແລະເມື່ອເຈົ້າຮັບປະທານ ແລະເມື່ອເຈົ້າດື່ມ ເຈົ້າກໍຮັບປະທານເພື່ອຕົວເຈົ້າເອງ ແລະດື່ມເພື່ອຕົວເຈົ້າເອງບໍ່
ແມ່ນຫລື?
7 ໃນເມື່ອເຢຣູຊາເລັມມີຄົນຢູ່ ແລະມັ່ງຄັ່ງ ມີຫົວເມືອງລ້ອມຮອບເນເກັບແລະແດນເນີນເຊຟາລາກໍມີຄົນຢູ່
ຖ້ອຍຄຳເຫລົ່ານີ້ເປັນພຣະຄຳຊຶ່ງພຣະຜູ້ເປັນເຈົ້າຊົງປະກາດໂດຍຜູ້ປະກາດພຣະທັມຣຸ່ນກ່ອນໆບໍ່ແມ່ນຫລື?”

### ຄວາມບໍ່ເຊື່ອຟັງເປັນສາເຫດຂອງການເປັນຊະເລີຍ

Punishment for Rejecting God’s Demands

8 ແລະພຣະຄຳຂອງພຣະຜູ້ເປັນເຈົ້າມາເຖິງເຊຄາຣີຢາວ່າ,
9 “ພຣະຜູ້ເປັນເຈົ້າຈອມໂຍທາສັ່ງດັ່ງນີ້ວ່າ ຈົ່ງພິພາກສາຕາມຄວາມຈິງ ຈົ່ງສະແດງຄວາມກະຣຸນາແລະຄວາມ
ປານີຕໍ່ພີ່ນ້ອງຂອງຕົນ
10 ຢ່າບີບບັງຄັບຍິງໝ້າຍ ລູກກຳພ້າພໍ່ ຄົນຕ່າງດ້າວ ຫລືຄົນຍາກຈົນ ແລະຢ່າຄິດອຸບາຍຊົ່ວໃນໃຈຕໍ່ພີ່ນ້ອງຂອງ
ຕົນ”

11 ແຕ່ເຂົາປະຕິເສດບໍ່ຍອມຟັງ ແລະຫັນຫຼັງຕົວເຂົ້າໃສ່ ແລະອຸດຫູຂອງເຂົາເສັຽເພື່ອເຂົາຈະບໍ່ໄດ້ຍິນ
12 ເຂົາໄດ້ກະທຳໃຈຂອງເຂົາໃຫ້ແຂງເຫມືອນເພັດ ຢ້ານວ່າເຂົາຈະໄດ້ຍິນພຣະທັມ ແລະພຣະຄຳ ຊຶ່ງພຣະຜູ້ເປ
ັນເຈົ້າຈອມໂຍທາໄດ້ຊົງສົ່ງໄປທາງຜູ້ປະກາດພຣະທັມລຸ້ນກ່ອນໂດຍວິນຍານຂອງພຣະອົງ ເຫດສະນັ້ນ ພຣະ
ພິໂຣດອັນຍິ່ງໃຫຍ່ຈຶ່ງໄດ້
ມາຈາກພຣະຜູ້ເປັນເຈົ້າຈອມໂຍທາ
13 ພຣະຜູ້ເປັນເຈົ້າຈອມໂຍທາກ່າວວ່າ “ເມື່ອເຮົາຮ້ອງຮຽກ ເຂົາບໍ່ຟັງສັນໃດ ເມື່ອເຂົາຮ້ອງທູນ ເຮົາກໍບໍ່ຟັງສັນ
ນັ້ນ
14 ແລະເຮົາກໍໃຫ້ເຂົາກະຈັດກະຈາຍໄປດ້ວຍລົມຫົສກຸດຖ້າມກາງປະຊາຊາດທັງສິ້ນຊຶ່ງເຂົາບໍ່ໄດ້ຮູ້ຈັກ ດັ່ງນັ້ນ
ແຜ່ນດິນທີ່ເຂົາຖິ້ມໄປຈຶ່ງວ່າງເປົ່າບໍ່ມີໃຜເຂົ້າອອກ ແລະແຜ່ນດິນທີ່ສຸກສະບາຍກໍເປັນທີ່ຮ້າງເປົ່າ”

## 8 ຊົງສັນຍາຈະໃຫ້ກຸງເຢຣູຊາເລັມຄືນສູ່ສະພາບເດີມ

God’s Promises to Zion

1 ແລະພຣະຄຳຂອງພຣະຜູ້ເປັນເຈົ້າຈອມໂຍທາມາຍັງຂ້າພະເຈົ້າວ່າ,
2 “ພຣະຜູ້ເປັນເຈົ້າຈອມໂຍທາສັ່ງດັ່ງນີ້ວ່າ ເຮົາຫວງແຫນຊີໂອນດ້ວຍຄວາມຫວງແຫນອັນຍິ່ງໃຫຍ່ ແລະເຮົາ
ຫວງແຫນນາງດ້ວຍຄວາມພິໂຣດຫລາຍ
3 ພຣະຜູ້ເປັນເຈົ້າກ່າວດັ່ງນີ້ວ່າ ເຮົາຈະກັບໄປຍັງຊີໂອນ ແລະຢູ່ຖ້າມກາງເຢຣູຊາເລັມ ແລະເຂົາຈະເອີ້ນເຢຣູຊາ
ເລັມວ່າ ເມືອງສັດຊື່ ແລະເອີ້ນພູເຂົາຂອງພຣະຜູ້ເປັນເຈົ້າຈອມໂຍທາວ່າ ພູເຂົາບໍຣິສຸດ
4 ພຣະຜູ້ເປັນເຈົ້າຈອມໂຍທາກ່າວດັ່ງນີ້ວ່າ “ຊາຍເຖົ້າຊະຣາແລະຍິງເຖົ້າຊະຣາຈະນັ່ງຢູ່ຕາມລານເມືອງເຢຣູຊາ
ເລັມອີກ ຕ່າງກໍມີໄມ້ເທົ້າຢູ່ໃນມືເພາະມີອາຍຸຫລາຍ
5 ແລະໃນລານເມືອງນັ້ນກໍຈະມີເດັກນ້ອຍຜູ້ຊາຍແລະຜູ້ຍິງແລ່ນຢູ່ທົ່ວໄປ
6 ພຣະຜູ້ເປັນເຈົ້າຈອມໂຍທາກ່າວດັ່ງນີ້ວ່າ ຖ້າເຣື່ອງນີ້ເປັນເຣື່ອງປລາດໃນສາຍຕາຂອງປະຊາຊົນທີ່ເຫລືອຢູ່
ໃນສມັຍນີ້ແລ້ວ ພຣະຜູ້ເປັນເຈົ້າຈອມໂຍທາກ່າວວ່າ ກໍຄວນຈະປລາດໃນສາຍຕາຂອງເຮົາດ້ວຍ
7 ພຣະຜູ້ເປັນເຈົ້າຈອມໂຍທາກ່າວດັ່ງນີ້ວ່າ ເບິ່ງແມ, ເຮົາຈະຊ່ອຍປະຊາຊົນຂອງເຮົາໃຫ້ພົ້ນຈາກປະເທດຕາ
ເວັນອອກ ແລະຈາກປະເທດຕາເວັນຕົກ
8 ແລະເຮົາຈະພາເຂົາທັງຫລາຍໃຫ້ມາອາສັຍຢູ່ຖ້າມກາງເຢຣູຊາເລັມ ແລະເຂົາທັງຫລາຍຈະເປັນປະຊາຊົນ
ຂອງເຮົາ ແລະເຮົາຈະເປັນພຣະເຈົ້າຂອງເຂົາທັງຫລາຍດ້ວຍຄວາມທ່ຽງຕົງແລະຊອບທັມ
9 ພຣະຜູ້ເປັນເຈົ້າຈອມໂຍທາກ່າວວ່າ ຈົ່ງໃຫ້ມືຂອງເຈົ້າທັງຫລາຍແຂງແຮງ ຄືເຈົ້າທັງຫລາຍຜູ້ໄດ້ຍິນຖ້ອຍຄຳ
ເຫລົ່ານີ້ໃນການນີ້ ຊຶ່ງມາຈາກປາກບັນດາຜູ້ປະກາດພຣະທັມ ໃນວັນທີ່ໄດ້ວາງຮາກພຣະວິຫານຂອງພຣະຜູ້
ເປັນເຈົ້າຈອມໂຍທາ ເພື່ອວ່າຈະໄດ້ກໍ່ສ້າງພຣະວິຫານນັ້ນຂຶ້ນ
10 ເພາະວ່າກ່ອນສມັຍນັ້ນບໍ່ມີຄ່າຈ້າງໃຫ້ແກ່ຄົນ ຫລືໃຫ້ແກ່ສັດ ທັງຜູ້ທີ່ເຂົ້າອອກກໍບໍ່ມີຄວາມປອດພັຍຈາກສັດ
ຕຣູ ເພາະເຮົາປ່ອຍໃຫ້ຄົນທັງຫລາຍຕໍ່ສູ້ກັບເພື່ອນບ້ານຂອງຕົນ
11 ພຣະຜູ້ເປັນເຈົ້າຈອມໂຍທາກ່າວດັ່ງນີ້ວ່າ ບັດນີ້ເຮົາຈະບໍ່ກະທຳຕໍ່ປະຊາຊົນທີ່ເຫລືອຢູ່ນີ້ຢ່າງກັບສມັຍກ່ອນ
12 ເພາະວ່າຈະມີການຫວ່ານຄວາມສົມບູນພູນສຸກ ເຄືອອະງຸ່ນຈະມີຫມາກແລະແຜ່ນດິນຈະໃຫ້ຜົນ ແລະທ້ອງ
ຟ້າຈະໃຫ້ນ້ຳໝອກ ແລະເຮົາຈະກະທຳໃຫ້ປະຊາຊົນທີ່ເຫລືອຢູ່ນີ້ຖືກຳມະສິດສິ່ງເຫລົ່ານີ້ທັງຫມົດ
13 ໂອ ເຊື້ອສາຍຂອງຢູດາ ແລະເຊື້ອສາຍຂອງອິສຣາເອນເອີຍ, ເຈົ້າເຄີຍເປັນຂີ້ປາກຖ້າມກາງປະຊາຊາດທັງ
ຫລາຍໃຫ້ເຂົາແຊ່ງສັນໃດ ເຮົາຈະຊ່ອຍເຈົ້າແລະເຈົ້າຈະໄດ້ເປັນແຫລ່ງພຣະພອນສັນນັ້ນ ຢ່າຢ້ານເລີຍ ແຕ່
ຈົ່ງໃຫ້ມືຂອງເຈົ້າແຂງແຮງເຖີດ

14 “ເພາະພຣະຜູ້ເປັນເຈົ້າຈອມໂຍທາກ່າວດັ່ງນີ້ວ່າ ເມື່ອບັນພະບຸຣຸດຂອງເຈົ້າຍົວະເຍົ້າໃຫ້ເຮົາໂກດນັ້ນ ເຮົາກໍ
ຕັ້ງໃຈວ່າຈະລົງໂທດເຈົ້າ ເຮົາບໍ່ໄດ້ຜ່ອນຄວາມຕັ້ງໃຈລົງ ພຣະຜູ້ເປັນເຈົ້າຈອມໂຍທາກ່າວດັ່ງນີ້ແຫລະ
15 ດັ່ງນັ້ນ ໃນວັນນີ້ເຮົາຕັ້ງໃຈອີກວ່າ ເຮົາຈະກະທຳດີຕໍ່ເຢຣູຊາເລັມ ແລະຕໍ່ເຊື້ອສາຍຂອງຢູດາ ຢ່າຢ້ານເລີຍ
16 ຕໍ່ໄປນີ້ເປັນສິ່ງທີ່ເຈົ້າທັງຫລາຍຕ້ອງກະທຳ ຈົ່ງເວົ້າຄວາມຈິງແກ່ກັນແລະກັນ ຈົ່ງໃຫ້ການພິພາກສາທີ່ປະຕູ
ເມືອງຂອງເຈົ້າທ່ຽງຕົງ ແລະກະທຳເພື່ອສັນຕິ
17 ຢ່າຄິດອຸບາຍຊົ່ວໃນໃຈຕໍ່ກັນແລະກັນ ຢ່າຮັກຄຳສາບານເທັດ ສິ່ງເຫລົ່ານີ້ເຮົາກຽດຊັງ” ພຣະຜູ້ເປັນເຈົ້າກ່າວ
ດັ່ງນີ້ແຫລະ

Joyful Fasting

18 ແລະພຣະຄຳຂອງພຣະຜູ້ເປັນເຈົ້າຈອມໂຍທາມາຍັງຂ້າພະເຈົ້າວ່າ,
19 “ພຣະຜູ້ເປັນເຈົ້າຈອມໂຍທາກ່າວດັ່ງນີ້ວ່າ ການອົດອາຫານໃນເດືອນທີສີ່ ການອົດອາຫານໃນເດືອນທີຫ້າ
ແລະການອົດອາຫານໃນເດືອນທີເຈັດ ແລະການອົດອາຫານໃນເດືອນທີສິບ ຈະເປັນທີ່ໃຫ້ຄວາມບັນເທີງ
ແລະຄວາມລ້າເລີງ ແລະເປັນການລ້ຽງທີ່ໃຫ້ຊື່ນຊົມແກ່ເຊື້ອສາຍຢູດາ ເຫດສັນນັ້ນເຈົ້າຈົ່ງຮັກຄວາມທ່ຽງຕົງ
ແລະສັນຕິພາບ

Many Peoples Drawn to Jerusalem

20 “ພຣະຜູ້ເປັນເຈົ້າຈອມໂຍທາກ່າວດັ່ງນີ້ວ່າ ຊົນຊາດທັງຫລາຍຍັງຈະມາ ຄືປະຊາຊົນທີ່ຍັງອາສັຍຢູ່ໃນຫົວ
ເມືອງອັນຫລວງຫລາຍ
21 ຊາວເມືອງນີ້ຈະໄປຫາຊາວເມືອງອີກເມືອງນຶ່ງ ກ່າວວ່າ “ໃຫ້ເຮົາໄປກັນທັນທີ ໄປທູນຂໍພຣະກະຣຸນາຕໍ່ພຣະຜູ້
ເປັນເຈົ້າ ແລະສແວງຫາພຣະຜູ້ເປັນເຈົ້າຈອມໂຍທາ ຂ້າພະເຈົ້າກໍຈະໄປ”
22 ຊົນຊາດທັງຫລາຍເປັນອັນມາກ ແລະບັນດາປະຊາຊາດທີ່ເຂັ້ມແຂງຈະມາສແວງຫາພຣະຜູ້ເປັນເຈົ້າຈອມໂຍ
ທາໃນເຢຣູຊາເລັມ ແລະທູນຂໍພຣະກະຣຸນາຕໍ່ພຣະຜູ້ເປັນເຈົ້າ
23 ພຣະຜູ້ເປັນເຈົ້າຈອມໂຍທາກ່າວດັ່ງນີ້ວ່າ ໃນສມັຍນັ້ນສິບຄົນຈາກປະຊາຊາດທຸກໆພາສາ ຈະຍຶດລີ້ນເສື້ອຄຸມ
ຂອງຍິວຄົນນຶ່ງໄວ້ແລ້ວກ່າວວ່າ “ຂໍໃຫ້ເຮົາໄປກັບທ່ານທັງຫລາຍເຖີດ ເພາະເຮົາໄດ້ຍິນວ່າ ພຣະຜູ້ເປັນເຈົ້າ
ຊົງສະຖິດກັບພວກທ່ານ”

## 9 ການພິພາກສາປະຊາຊາດເພື່ອນບ້ານ

Judgment on Israel’s Enemies An Oracle

1 ພຣະຄຳຂອງພຣະຜູ້ເປັນເຈົ້າມີມາກ່າວໂທດເມືອງຮາດຣັກ ແລະຈະມາຢູ່ເຫນືອເມືອງດາມັສກັສ ດ້ວຍວ່າຫົວ
ເມືອງອາຣາມເປັນຂອງພຣະຜູ້ເປັນເຈົ້າ ແມ້ແຕ່ອິສຣາເອນທຸກເຜົ່າດ້ວຍ
2 ເມືອງຮາມັທຊຶ່ງມີເຂດແດນຕິດກັນກໍຮວມຢູ່ດ້ວຍ ຕີເຣ ແລະຊີໂດນ ເຖິງຈະເປັນເມືອງສລາດກໍຕາມ
3 ຕີເຣສ້າງກຳແພງປ້ອມໄວ້ກັນເມືອງ ແລະສະສົມເງິນໄວ້ເປັນກອງຢ່າງກອງຝຸ່ນ ແລະທອງຄຳຢ່າງຂີ້ຝຸ່ນຕາມຖ
ນົນ
4 ແຕ່ນີ້ແຫລະ ພຣະຜູ້ເປັນເຈົ້າຊົງຍຶກເອົາເຂົ້າຂອງຂອງເມືອງນີ້ໄປເສັຽ ແລະແກວ່ງຊັບສິນຂອງເມືອງນີ້ລົງທະ
ເລ ແລະເມືອງນີ້ຈະຖືກໄຟເຜົາຜານເສັຽ
5 ເມືອງອັສເກໂລນຈະເຫັນ ແລະຢ້ານ ເມືອງກາຊາຈະເຫັນ ແລະສັ່ນສະທ້ານຢ່າງຍິ່ງ ເມືອງເອກໂລນດ້ວຍ
ເຫມືອນກັນ ເພາະຄວາມຫວັງຂອງເມືອງນີ້ຈະຫຍຸ້ງ ກະສັດຈະພິນາດຈາກເມືອງກາຊາ ເມືອງອັສເກໂລນຈະ
ບໍ່ມີຄົນອາສັຍຢູ່
6 ຄົນເລືອດປະສົມຈະມາຢູ່ໃນເມືອງອັສໂດດ ເຮົາຈະກະທຳໃຫ້ຄວາມຍິ່ງຜຍອງຂອງຟີລິສຕິນສູນສິ້ນໄປ

7 ເຮົາຈະເອົາເລືອດອອກໄປເສຍຈາກປາກຂອງເຂົາ ແລະເອົາຂອງເປື້ອນເປິອອກໄປຈາກລະຫວ່າງແຂ້ວຂອງ
ເຂົາເສຍ ເມືອງນີ້ຈະເປັນຄົນທີ່ເຫລືອຢູ່ແກ່ພຣະຜູ້ເປັນເຈົ້າຂອງເຮົາດ້ວຍ ຈະເປັນເຫມືອນຕະກູນນຶ່ງໃນຢູດາ
ແລະເອກໂລນຈະເຫມືອນຄົນເຢບຸສ
8 ແລະເຮົາຈະຕັ້ງຄ້າຍທີ່ວິຫານຂອງເຮົາເປັນກອງຍາມ ເພື່ອຈະບໍ່ໃຫ້ຜູ້ໃດເດີນທັບໄປມາໄດ້ ຈະບໍ່ມີຜູ້ບີບບັງ
ຄັບມາຂົ່ມຂີ່ເຂົາໄດ້ ເພາະບັດນີ້ເຮົາເຫັນກັບຕາຂອງເຮົາເອງ

**ກະສັດໃນອະນາຄົດຂອງຊີໂອນ**

The Coming Ruler of God’s People

(ມທ 21:5; ໂຢຮັນ 12:14-15)

9 ທິດາແຫ່ງຊີໂອນເອີຍ ຈົ່ງລ່າເລີງຢ່າງຍິ່ງເຖີດ ໂອ ບຸດຕຣີແຫ່ງເຢຣູຊາເລັມເອີຍ ຈົ່ງໂຫ່ຮ້ອງ ເບິ່ງແມ, ກະສັດ
ຂອງເຈົ້າສະເດັດມາຫາເຈົ້າ ຊົງຄວາມຍຸດຕິທັມ ແລະຄວາມລອດ ພຣະອົງຊົງອ່ອນສຸພາບແລະຊົງຖ່ອມຕົວ
ລົງມານັ່ງເທິງຫລັງລໍ ແລະຂີ່ລໍນ້ອຍໂຕທີ່ເກີດມາຈາກລໍແມ່
10 ເຮົາຈະກຳຈັດຣົດຮົບເສຍຈາກເອຟຣາອິມ ແລະມ້າເສຍຈາກເຢຣູຊາເລັມ ທະນູສົງຄາມຖືກກຳຈັດເສຍດ້ວຍ
ແລະທ່ານຈະບັນຊາສັນຕິໃຫ້ມີແດ່ປະຊາຊາດທັງຫລາຍ ອານາຈັກຂອງທ່ານຈະມີຈາກທະເລນີ້ໄປເຖິງທະເລ
ນັ້ນ ແລະຈາກແມ່ນ້ຳນັ້ນໄປເຖິງສຸດປາຍພິພົບ

**ການໃຫ້ຊີໂອນຄືນສູ່ສະພາບເດີມ**

11 ສ່ວນເຈົ້າ ເພາະໂລຫິດແຫ່ງຄຳສັນຍາຂອງເຮົາຊຶ່ງມີຕໍ່ເຈົ້າ ເຮົາຈະປົດປ່ອຍຊະເລີຍໃນພວກເຈົ້າໃຫ້ເປັນອິສ
ຣະຈາກນ້ຳສ້າງທີ່ແຫ້ງນັ້ນ
12 ໂອ ນັກໂທດທີ່ມີຄວາມຫວັງເອີຍ, ຈົ່ງກັບໄປຍັງທີ່ກຳບັງເຂັ້ມແຂງຂອງເຈົ້າ ວັນນີ້ເຮົາປະກາດວ່າ ເຮົາຈະຄືນ
ແກ່ເຈົ້າສອງເທົ່າ
13 ເພາະເຮົາໄດ້ດັດຢູດາເຫມືອນໂຄ້ງຄັນທະນູ ເຮົາໄດ້ກະທຳເອຟຣາອິມໃຫ້ເປັນລູກທະນູ ໂອຊີໂອນເອີຍ ເຮົາ
ຈະແກວ່ງບຸດທັງຫລາຍຂອງເຈົ້າເປັນອາວຸດຕໍ່ສູ້ບຸດທັງຫລາຍຂອງເຈົ້າເດີ ກຣີກເອີຍ ແລະແກວ່ງເຈົ້າຢ່າງ
ດາບຂອງນັກຮົບ
14 ແລ້ວພຣະຜູ້ເປັນເຈົ້າຈະຊົງປາກົດເຫນືອເຂົາທັງຫລາຍ ແລະລູກທະນູຂອງພຣະອົງຈະອອກໄປເຫມືອນຟ້າ
ແລບ ພຣະຜູ້ ເປັນເຈົ້າຈະຊົງເປົ່າເຂົາສັດ ແລະສະເດັດໄປໃນລົມຫົວກຸດທິດໃຕ້
15 ພຣະຜູ້ເປັນເຈົ້າຈອມໂຍທາຈະພິທັກຮັກສາເຂົາທັງຫລາຍໄວ້ ແລະເຂົາທັງຫລາຍຈະລ້າງຜານ ແລະຢຽບນັກ
ຍິງກະຖຸນລົງ ແລະຈະດື່ມເລືອດຂອງເຂົາຢ່າງເຫລົ້າອະງຸ່ນ ແລະຈະອີ່ມເຫມືອນຊາມປຽກເຫມືອນແຈແທ່ນບູ
ຊາ
16 ໃນວັນນັ້ນ ພຣະຜູ້ເປັນເຈົ້າພຣະເຈົ້າຂອງເຂົາຈະຊົງຊ່ອຍເຂົາ ເພາະເຂົາທັງຫລາຍເປັນປະຊາຊົນຂອງພຣະ
ອົງດັ່ງຝູງແກະ ເຂົາທັງຫລາຍຈະສ່ອງແສງໃນແຜ່ນດິນຂອງພຣະອົງ ເໝືອນກັບເພັດທີ່ຢູ່ໃນມົງກຸດ
17 ນັ້ນຊ່າງດີ ແລະງາມແທ້ໆ ເມັດເຂົ້າຈະກະທຳໃຫ້ຄົນຫນຸ່ມເຕີບໂຕ ແລະຫມາກອະງຸ່ນຈະກະທຳໃຫ້ຍິງສາວ
ຈະເຣີນວັຍ

## 10 ພຣະຜູ້ເປັນເຈົ້າຊົງໄຖ່ຊົນຊາດຂອງພຣະອົງ

Restoration of Judah and Israel

1 ຈົ່ງຂໍຝົນຈາກພຣະຜູ້ເປັນເຈົ້າ ໃນຣະດູຝົນຊຸກປາຍຣະດູ ຂໍຈາກພຣະຜູ້ເປັນເຈົ້າຜູ້ຊົງປັ້ນເມກພະຍຸ ຜູ້ຊົງປະ
ທານຫ່າຝົນແກ່ມະນຸດ ແລະຜັກໃນທົ່ງນາແກ່ທຸກຄົນ

2 ເພາະວ່າຮູບໂຄຣົບປະຈຳບ້ານເວົ້າບໍ່ໄດ້ເຣື່ອງ ແລະຜູ້ທຳນວາຍກໍເຫັນນິມິດເທັດ ຄົນຊ່າງຝັນເລົ່າຄວາມຝັນ
ເທັດ ແລະໃຫ້ຄຳເລົ້າໂລມທີ່ເປົ່າປໂຍດ ເຫດສັນນັ້ນປະຊາຊົນຈຶ່ງຫລົງໄປຢ່າງແກະ ເຂົາທຸກໃຈເພາະຂາດຜູ້
ນຳພາ (Shepherd)
3 “ເຮົາພິໂຣດຜູ້ນຳຢ່າງຮຸນແຮງ ແລະຈະລົງໂທດບັນດາແບ້ເຖິກ ເພາະພຣະຜູ້ເປັນເຈົ້າຈອມໂຍທາເອົາພຣະ
ທັຍໃສ່ຝູງສັດຂອງພຣະອົງ ຄືເຊື້ອສາຍຢູດາ ແລະຈະຊົງກະທຳເຂົາໃຫ້ເປັນເຫມືອນມ້າເສິກເຂັ້ມແຂງໃນສົງ
ຄາມ
4 ສີລາມຸມເອກຈະອອກມາຈາກເຂົາ ຫມຸດຄຶງເຕັນຈະອອກມາຈາກເຂົາ ຄັນທະນູຈະອອກມາຈາກເຂົາ ແລະຜູ້
ປົກຄອງທຸກຄົນຈະອອກມາຈາກເຂົາ
5 ຮວມກັນເຂົ້າເຂົາຈະເປັນຢ່າງຊາຍສະກັນໃນສົງຄາມ ຢຽບຢ່ຳສັດຕຣູໄປໃນຂີ້ຕົມຕາມຖນົນ ເຂົາຈະຕໍ່ສູ້ເພາະ
ພຣະຜູ້ເປັນເຈົ້າຊົງສະຖິດກັບເຂົາ ເຂົາຈະຜາບແພ້ແມ່ນແຕ່ຜູ້ທີ່ຢູ່ເທິງຫລັງມ້າ
6 “ເຮົາຈະຫນຸນກຳລັງເຊື້ອສາຍຂອງຢູດາ ແລະເຮົາຈະຊ່ອຍເຊື້ອສາຍຂອງໂຢເຊັບໃຫ້ລອດ ເຮົາຈະນຳເຂົາກັບ
ມາເພາະເຮົາສົງສານເຂົາ ແລະເຂົາຈະເປັນເຫມືອນຢ່າງວ່າ ເຮົາບໍ່ໄດ້ປະຖິ້ມເຂົາ ເພາະເຮົາຄືພຣະຜູ້ເປັນເຈົ້
າພຣະເຈົ້າຂອງເຂົາ ເຮົາຈະຕອບເຂົາ
7 ແລ້ວເອຟຣາອິມຈະເປັນເຫມືອນຊາຍສະກັນ ແລະຈິດໃຈຂອງເຂົາທັງຫລາຍຈະຊື່ນຊົມຍິນດີເຫມືອນໄດ້ດື່ມ
ເຫລົ້າອະງຸ່ນ ລູກຫລານຂອງເຂົາຈະໄດ້ເຫັນແລະຊົມຊື່ນຍິນດີ ແລະຈິດໃຈຂອງເຂົາຈະຍິນດີເຫລືອລົ້ນໃນພ
ຣະຜູ້ເປັນເຈົ້າ
8 “ເຮົາຈະຜິວປາກເອີ້ນເຂົາ ແລະຮວບຮວມເຂົາເຂົ້າມາ ເພາະເຮົາໄດ້ໄຖ່ເຂົາໄວ້ແລ້ວ ແລະເຂົາຈະມີມາກ
ມາຍເຫມືອນການກ່ອນ
9 ເຖິງວ່າເຮົາໄດ້ຫວ່ານເຂົາໄປຖ້າມກາງຊົນຊາດທັງຫລາຍ ແຕ່ເຂົາຈະຣະລຶກເຖິງເຮົາໃນປະເທດທີ່ຫ່າງໄກນັ້ນ
ເຂົາຈະດຳຣົງຊີວິດຢູ່ກັບບຸດຫລານຂອງເຂົາແລະກັບມາ
10 ເຮົາຈະນຳເຂົາກັບຈາກແຜ່ນດິນເອຢິບ ແລະຮວບຮວມເຂົາມາຈາກອັສຊີເຣັຽ ແລະເຮົາຈະນຳເຂົາມາຍັງແຜ່ນ
ດິນກີເລອາດແລະເລບານອນຈົນຈະບໍ່ມີທີ່ໃຫ້ເຂົາຢູ່
11 ພຣະອົງສະເດັດຜ່ານຂ້າມທະເລແຫ່ງຄວາມລະທົມ ແລະຈະຊົງທຸບຄື້ນທະເລ ແລະທີ່ເລິກທັງສິ້ນຂອງແມ່ນ້ຳ
ນິນຈະແຫ້ງໄປ ຄວາມຈອງຫອງຂອງອັສຊີເຣັຽຈະຕົກຕ່ຳ ແລະກະບອງ (ຄະທາ) ຂອງເອຢິບຈະພາກໄປເສັຽ
12 ເຮົາຈະຊົງທຳໃຫ້ເຂົາທັງຫລາຍເຂັ້ມແຂງໃນພຣະຜູ້ເປັນເຈົ້າ ແລະເຂົາຈະອວດພຣະນາມຂອງພຣະຜູ້ເປັນ
ເຈົ້າດັ່ງນີ້ແຫລະ

## 11

Chapter 11

1 ໂອ ເລບານອນເອີຍ, ຈົ່ງເປີດບັນດາປະຕູຂອງເຈົ້າ ເພື່ອໄຟຈະໄດ້ເຜົາຜານໄມ້ສົນສີດາຂອງເຈົ້າເສັຽ
2 ໂອ ຕົ້ນແປກເອີຍ, ຈົ່ງຮ້ອງໄຫ້ເຖີດ ເພາະໄມ້ສົນສີດາລົ້ມເສັຽແລ້ວ ເພາະບັນດາໄມ້ທີ່ສະງ່າງາມພິນາດລົງໄປ
ແລ້ວ ຕົ້ນກໍ່ເມືອງບາຊານເອີຍ ຈົ່ງຮ້ອງໄດ້ເຖີດ ເພາະປ່າທຶບຖືກປ້ຳລົງເສັຽແລ້ວ
3 ຟັງເດີ ສຽງຜູ້ປົກຄອງຮ້ອງຄວນຄາງ ເພາະສັກສີຂອງເຂົາທັງຫລາຍກໍຖືກທຳລາຍໄປແລ້ວ ຟັງເດີ ສຽງສິງ
ຫນຸ່ມຄຳລາມ ເພາະວ່າດົງລຸ່ມແມ່ນ້ຳຈໍແດນໄດ້ຖືກທຳລາຍລົງ

**ຄົນລ້ຽງແກະສອງຄົນ**

Two Kinds of Shepherds

4 ພຣະຜູ້ເປັນເຈົ້າພຣະເຈົ້າຂອງຂ້າພະເຈົ້າສັ່ງດັ່ງນີ້ວ່າ, “ຈົ່ງລ້ຽງຝູງແບ້ ແກະທີ່ຕ້ອງຖືກຂ້າ

5 ບັນດາຜູ້ທີ່ຊື້ມັນໄປກໍຂ້າມັນເສັຽ ແລະບໍ່ຕ້ອງມີໂທດ ແລະບັນດາຄົນທີ່ຂາຍມັນກ່າວວ່າ, "ສາທຸການແດ່ພຣະ
ຜູ້ເປັນເຈົ້າ ຂ້າພະເຈົ້າຮັ່ງມີແລ້ວ" ແລະຜູ້ລ້ຽງແກະຂອງມັນທັງຫລາຍບໍ່ສົງສານມັນເລີຍ
6 ພຣະຜູ້ເປັນເຈົ້າກ່າວວ່າ ເພາະເຮົາຈະບໍ່ສົງສານຊາວແຜ່ນດິນນີ້ອີກຕໍ່ໄປ ເຮົາກໍຈະກະທຳໃຫ້ເຂົາຕ່າງຄົນຕົກ
ເຂົ້າໄປໃນມືຂອງຜູ້ລ້ຽງແກະຂອງເຂົາ ແລະຕ່າງກໍຕົກໄປໃນພຣະຫັດຂອງກະສັດຂອງເຂົາ ແລະທ່ານຈະບີບ
ໂລກໃຫ້ແຫລກ ແລະເຮົາຈະບໍ່ຊ່ອຍເຫລືອຄົນນຶ່ງຄົນໃດໃຫ້ພົ້ນມືຂອງທ່ານທັງຫລາຍ"
7 ດັ່ງນັ້ນ ຂ້າພະເຈົ້າໄດ້ລ້ຽງດູຝູງແບ້ ແກະທີ່ຖືກຂ້າ ເພື່ອເຫັນແກ່ຜູ້ທີ່ຄ້າແກະ ຂ້າພະເຈົ້າຈຶ່ງເອົາໄມ້ເທົ້າສອງ
ອັນ ອັນນຶ່ງໃຫ້ຊື່ວ່າ ພຣະຄຸນ ອີກອັນນຶ່ງໃຫ້ຊື່ວ່າ ນໍ້ານຶ່ງໃຈດຽວ ແລະຂ້າພະເຈົ້າກໍລ້ຽງດູແກະ
8 ໃນເດືອນດຽວຂ້າພະເຈົ້າທຳລາຍຜູ້ລ້ຽງແກະສາມຄົນນັ້ນເສັຽ ແຕ່ຂ້າພະເຈົ້າເບື່ອແກະເສັຽແລ້ວ ແລະແກະກໍ
ກຽດຊັງຂ້າພະເຈົ້າດ້ວຍ
9 ຂ້າພະເຈົ້າຈຶ່ງວ່າ "ຂ້າຈະບໍ່ລ້ຽງດູເຈົ້າ ພວກທີ່ຕາຍໄປກໍໃຫ້ຕາຍໄປ ພວກທີ່ຈະຕ້ອງຖືກທຳລາຍກໍໃຫ້ຖືກທຳ
ລາຍໄປ ແລະໃຫ້ບັນດາທີ່ເຫລືອຢູ່ນັ້ນກິນຊີ້ນຊຶ່ງກັນແລະກັນ
10 ຂ້າພະເຈົ້າກໍເອົາໄມ້ເທົ້າທີ່ຊື່ພຣະຄຸນນັ້ນມາຫັກ ລົ້ມເລີກພັນທະສັນຍາຊຶ່ງຂ້າພະເຈົ້າໄດ້ທຳໄວ້ກັບຊົນຊາດ
ທັງຫລາຍເສັຽ
11 ຈຶ່ງເປັນອັນລົ້ມເລີກໃນວັນນັ້ນ ແລະບັນດານັກຄ້າແກະ ຜູ້ຊຶ່ງຄອຍເບິ່ງຂ້າພະເຈົ້າຢູ່ກໍຮູ້ວ່ານັ້ນເປັນພຣະຄຳ
ຂອງພຣະຜູ້ເປັນເຈົ້າ
12 ແລ້ວຂ້າພະເຈົ້າຈຶ່ງເວົ້າກັບເຂົາວ່າ, "ຖ້າທ່ານເຫັນຄວນກໍຂໍຄ່າຈ້າງແກ່ເຮົາ ຖ້າບໍ່ເຫັນຄວນກໍບໍ່ຕ້ອງໃຫ້" ແລ້ວ
ເຂົາກໍຊັ່ງເງິນສາມສິບເຊເກລອອກໃຫ້ແກ່ຂ້າພະເຈົ້າເປັນຄ່າຈ້າງ
13 ແລ້ວພຣະຜູ້ເປັນເຈົ້າກ່າວກັບຂ້າພະເຈົ້າວ່າ, "ຈົ່ງໂຍນເງິນນັ້ນເຂົ້າໄປໃນຄັງ" ຄືເງິນກ້ອນງາມທີ່ເຂົາຈ່າຍໃຫ້
ຂ້າພະເຈົ້າ ດັ່ງນັ້ນຂ້າພະເຈົ້າຈຶ່ງເອົາເງິນສາມສິບເຊເກລໂຍນເຂົ້າໄປໃນພຣະຄັງໃນພຣະວິຫານຂອງພຣະຜູ້
ເປັນເຈົ້າ
14 ແລ້ວຂ້າພະເຈົ້າກໍຫັກໄມ້ເທົ້າອັນທີສອງທີ່ຊື່ວ່າ ນໍ້ານຶ່ງໃຈດຽວນັ້ນເສັຽ ຄວາມເປັນນໍ້ານຶ່ງໃຈດຽວຂອງຢູດາ
ແລະອິສຣາເອນກໍຫັກສະບັ້ນລົງ
15 ແລ້ວພຣະຜູ້ເປັນເຈົ້າກ່າວກັບຂ້າພະເຈົ້າວ່າ, "ຈົ່ງຫຍິບເຄື່ອງໃຊ້ຂອງຄົນລ້ຽງແກະທີ່ໄຮ້ຄ່າຂຶ້ນມາອີກຄັ້ງນຶ່ງ
16 ເພາະເຮົາກຳລັງຕັ້ງຄົນລ້ຽງແກະຜູ້ນຶ່ງໃນແຜ່ນດິນນີ້ ຜູ້ບໍ່ສົນໃຈຕົວທີ່ກຳລັງພິນາດ ຫລືສແວງຫາຕົວທີ່ຍັງໜຸ່ມ
ຫລືຮັກສາຕົວທີ່ກະດູກຫັກ ຫລືລ້ຽງດູຕົວທີ່ເປັນປົກກະຕິ ແຕ່ກິນຊີ້ນຂອງແກະອ້ວນທຸກໂຕ ຈີກກິນຈົນກະທັ່ງ
ເຖິງກີບຂອງມັນ
17 ວິບັດແກ່ຄົນລ້ຽງແກະຜູ້ໄຮ້ຄ່າຂອງເຮົາ ຜູ້ທີ່ປະຖິ້ມຝູງແກະເສັຽ ຂໍໃຫ້ດາບຟັນແຂນຂອງເຂົາເຖີດ ແລະຟັນຕາ
ຂວາຂອງເຂົາເຖີດ ຂໍໃຫ້ແຂນຂອງເຂົາລີບໄປເສັຽ ແລະໃຫ້ຕາຂວາຂອງເຂົາບອດທີ່ດຽວ"

## 12 ເຢຣູຊາເລັມຈະຖືກປົດປ່ອຍໃນອະນາຄົດ

Jerusalem's Victory An Oracle

1 ພຣະຄຳຂອງພຣະຜູ້ເປັນເຈົ້າກ່ຽວດ້ວຍເຣື່ອງອິສຣາເອນ ພຣະຜູ້ເປັນເຈົ້າຊົງຄຶງທ້ອງຟ້າອອກ ແລະວາງຮາກ
ພິພົບ ແລະປັ້ນຈິດວິນຍານໃຫ້ມີຢູ່ໃນມະນຸດ ກ່າວວ່າ,
2 "ເບິ່ງແມ, ເຮົາກຳລັງຈະທຳກຸງເຢຣູຊາເລັມໃຫ້ເປັນຖ້ວຍນໍ້າເມົາສຳລັບບັນດາຊົນຊາດທັງຫລາຍທີ່ຢູ່ລ້ອມ
ຮອບ ຖ້ວຍນັ້ນຈະຢູ່ເໜືອຢູດາເມື່ອກຸງເຢຣູຊາເລັມຖືກລ້ອມ

3 ໃນວັນນັ້ນ ເຮົາຈະກະທຳໃຫ້ເຢຣູຊາເລັມເປັນສີລາຫນັກແກ່ບັນດາຊົນຊາດທັງຫລາຍ ຜູ້ໃດທີ່ພຍາຍາມຍົກ
ຫີນນັ້ນຂຶ້ນຈະກະທຳໃຫ້ຕົວເຂົາເອງບາດເຈັບຢ່າງສາຫັດ ແລະປະຊາຊາດທັງຫລາຍໃນພິພົບຈະສົມທົບກັນ
ສູ້ເຢຣູຊາເລັມ
4 ພຣະຜູ້ເປັນເຈົ້າກ່າວວ່າ, "ໃນວັນນັ້ນ ເຮົາຈະໃຫ້ມ້າທຸກໂຕວຸ້ນວາຍ ແລະກະທຳໃຫ້ຄົນຂີ່ບ້າຄັ່ງ ແຕ່ເຮົາຈະ
ມືນຕາເບິ່ງເຊື້ອສາຍຢູດາ ແລະເຮົາກະທຳໃຫ້ມ້າທຸກໂຕຂອງຊົນຊາດທັງຫລາຍຕາບອດໄປ
5 ແລ້ວຫົວຫນ້າຕະກູນຢູດາຈະຮ່ຳເພິງໃນໃຈວ່າ "ຊາວເຢຣູຊາເລັມເປັນກຳລັງຂອງເຮົາ ເນື່ອງຈາກພຣະຜູ້ເປັນ
ເຈົ້າຈອມໂຍທາພຣະເຈົ້າຂອງເຂົາ"
6 "ໃນວັນນັ້ນ ເຮົາຈະກະທຳໃຫ້ຫົວຫນ້າຕະກູນຢູດາທັງຫລາຍເຫມືອນຫມໍ້ຮ້ອນແດງຢູ່ຖ້າມກາງກອງຟືນ
ເຫມືອນດັ່ງກອງໄຟຢູ່ໃນປ່າແລະຢູ່ຕາມທົ່ງນາທີ່ມີເຂົ້າສຸກເຕັມຢູ່ ແລະຈະເຜົາຜານບັນດາຊົນຊາດທັງຫລາຍ
ທີ່ຢູ່ລ້ອມຮອບໄປທາງຂວາແລະໄປທາງຊ້າຍເສັຽ ຝ່າຍເຢຣູຊາເລັມຈະມີຄົນອາສັຍຢູ່ໃນທີ່ດິນນັ້ນເອງ ຄືເຢຣູ
ຊາເລັມ
7 "ແລະພຣະຜູ້ເປັນເຈົ້າຈະປະທານຊັຍຊະນະແກ່ເຕັນຂອງຢູດາກ່ອນ ເພື່ອວ່າສັກສີແຫ່ງຣາຊວົງດາວິດ ແລະ
ສັກສີແຫ່ງຊາວເຢຣູຊາເລັມຈະບໍ່ໄດ້ເປັນທີ່ຍົກຍ້ອງເຫນືອກວ່າຂອງຢູດາ
8 ໃນວັນນັ້ນພຣະຜູ້ເປັນເຈົ້າຈະຊົງບັງຊາວເຢຣູຊາເລັມໄວ້ ເພື່ອວ່າຄົນທີ່ອ່ອນແອທີ່ສຸດຖ້າມກາງເຂົາ ໃນວັນນ
ນັ້ນຈະເປັນເຫມືອນດາວິດ ແລະຣາຊວົງຂອງດາວິດຈະເປັນເຫມືອນພຣະຜູ້ເປັນເຈົ້າ ເຫມືອນທູດຂອງພຣະຜູ້
ເປັນເຈົ້ານຳຫນ້າເຂົາທັງຫລາຍ
9 ໃນວັນນັ້ນ ເຮົາຈະສແວງທີ່ຈະທຳລາຍປະຊາຊາດທັງສິ້ນຊຶ່ງເຂົ້າມາຕໍ່ສູ້ເຢຣູຊາເລັມ

Mourning for the Pierced One

10 "ແລະເຮົາຈະເທວິນຍານແຫ່ງຄວາມເມດຕາເອັນດູ ແລະການອ້ອນວອນເທິງຣາຊວົງດາວິດ ແລະຊາວເຢຣູ
ຊາເລັມ ດັ່ງນັ້ນເມື່ອເຂົາທັງຫລາຍມອງເບິ່ງເຮົາ ຜູ້ຊຶ່ງເຂົາເອງໄດ້ແທງ ເຂົາຈະໄວ້ທຸກເພື່ອບຸດຄົນດຽວຂອງ
ຕົນ ແລະຮ້ອງໄຫ້ຢ່າງຂົມຂື່ນເພື່ອທ່ານ ເຫມືອນຢ່າງຄົນຮ້ອງໄຫ້ເພື່ອບຸດຫົວປີຂອງຕົນ
11 ໃນວັນນັ້ນ ການໄວ້ທຸກໃນເຢຣູຊາເລັມຈະໃຫຍ່ໂຕຢ່າງການໄວ້ທຸກເພື່ອຮາດາດຣິມໂມນໃນທີ່ຮາບເມກິດໂດ
12 ແຜ່ນດິນຈະໄວ້ທຸກ ຕາມຄອບຄົວແຕ່ລະຄອບຄົວ ຄອບຄົວຣາຊວົງດາວິດຕ່າງຫາກ ແລະບັນດາ
ພັຣຍາຂອງທ່ານຕ່າງຫາກ ຄອບຄົວຂອງວົງນາທານຕ່າງຫາກ ແລະບັນດາພັຣຍາຂອງເຂົາຕ່າງຫາກ
13 ຄອບຄົວຂອງວົງເລວີຕ່າງຫາກ ແລະພັຣຍາຂອງເຂົາຕ່າງຫາກ ຄອບຄົວຕະກູນຊີເມອີຕ່າງຫາກ ແລະພັຣຍາ
ຂອງເຂົາຕ່າງຫາກ
14 ແລະທຸກຄອບຄົວທີ່ເຫລືອຢູ່ກໍໄວ້ທຸກຕ່າງຫາກ ແລະພັຣຍາຂອງເຂົາຕ່າງຫາກ

## 13

Chapter 13

1 "ໃນວັນນັ້ນ ຈະມີນ້ຳພຸພຸ່ງຂຶ້ນສຳລັບຣາຊວົງຂອງດາວິດ ແລະຊາວເຢຣູຊາເລັມ ເພື່ອຈະຊຳຮະເຂົາໃຫ້ພົ້ນ
ຈາກບາບແລະຄວາມບໍ່ສະອາດ

Idolatry Cut Off

2 "ພຣະຜູ້ເປັນເຈົ້າຈອມໂຍທາກ່າວວ່າ ໃນວັນນັ້ນ ເຮົາຈະກຳຈັດຊື່ຂອງຮູບໂຄຣົບເສັຽຈາກແຜ່ນດິນ ເພື່ອວ່າ
ເຂົາຈະຣະລຶກເຖິງອີກບໍ່ໄດ້ເລີຍ ແລະເຮົາຈະໄລ່ຜູ້ປະກາດພຣະທັມ ແລະວິນຍານທີ່ບໍ່ສະອາດໄປເສັຽຈາກ
ແຜ່ນດິນ

3 ຖ້າມີຜູ້ໃດປາກົດຕົວເປັນຜູ້ປະກາດພຣະທັມອີກ ບິດາມານດາຜູ້ໃຫ້ເຂົາບັງເກີດມານັ້ນຈະເວົ້າກັບເຂົາວ່າ
"ເຈົ້າຢ່າມີຊີວິດຢູ່ເລີຍ ເພາະເຈົ້າເວົ້າຕົວະໃນພຣະນາມຂອງພຣະຜູ້ເປັນເຈົ້າ" ເມື່ອເຂົາປະກາດພຣະທັມ ບິ
ດາມານດາຜູ້ໃຫ້ເຂົາເກີດມາຈະແທງເຂົາໃຫ້ທະລຸ
4 ໃນວັນນັ້ນ ຜູ້ປະກາດພຣະທັມທຸກຄົນຈະມີຄວາມລະອາຍເພາະນິມິດຂອງເຂົາເມື່ອປະກາດພຣະທັມ ເຂົາຈະ
ບໍ່ສວມຜ້າມີຂົນເພື່ອລໍ້ລວງອີກຕໍ່ໄປ
5 ແຕ່ເຂົາຈະກ່າວວ່າ "ຂ້າພະເຈົ້າບໍ່ແມ່ນຜູ້ປະກາດພຣະທັມ ຂ້າພະເຈົ້າເປັນຊາວນາ ເພາະວ່າພື້ນດິນເປັນກຳ
ມະສິດຂອງຂ້າພະເຈົ້າ ຕັ້ງແຕ່ຂ້າພະເຈົ້າຍັງຫນຸ່ມ"
6 ແລະຖ້າຜູ້ໃດຈະຖາມເຂົາວ່າ, "ເປັນຫຍັງທ່ານມີແຜເປັນທີ່ຫລັງ?" ເຂົາຈະຕອບວ່າ, "ຂ້າພະເຈົ້າໄດ້ແຜເປັນ
ນັ້ນໃນເຮືອນຂອງພວກເພື່ອນຂອງຂ້າພະເຈົ້າ"

**ການຕີຄົນລ້ຽງແກະຂອງພຣະເຈົ້າ**

The Shepherd Struck, the Flock Scattered

7 ພຣະຜູ້ເປັນເຈົ້າຈອມໂຍທາສັ່ງວ່າ, "ດາບເອີຍ ຈົ່ງຕື່ນຂຶ້ນຕໍ່ສູ້ຄົນລ້ຽງແກະຂອງເຮົາ ຈົ່ງຕໍ່ສູ້ຄົນລ້ຽງແກະ ແລະ
ຝູງແກະນັ້ນຈະກະຈັດກະຈາຍໄປ ເຮົາຈະອວ່າຍມືຂອງເຮົາຕໍ່ສູ້ກັບຕົວເລັກຕົວນ້ອຍ
8 ພຣະຜູ້ເປັນເຈົ້າກ່າວວ່າ ທົ່ວທັງແຜ່ນດິນຈະຕ້ອງກຳຈັດເສັຽໃຫ້ພິນາດສອງໃນສາມ ແລະເຫລືອໄວ້ນຶ່ງໃນ
ສາມ
9 ເຮົາຈະເອົານຶ່ງໃນສາມນີ້ໃສ່ໃນໄຟ ແລະເຮົາຈະຫລໍ່ຫລອມເຂົາເຫມືອນຫລໍ່ຫລອມເງິນ ແລະລອງເບິ່ງເຂົາ
ເຫມືອນທົດລອງທອງຄຳ ເຂົາຈະຮ້ອງທູນອອກພຣະນາມຂອງເຮົາ ແລະເຮົາຈະຕອບເຂົາ ເຮົາຈະກ່າວວ່າ
"ເຂົາທັງຫລາຍເປັນຊົນຊາດຂອງເຮົາ" ແລະເຂົາຈະກ່າວວ່າ "ພຣະຜູ້ເປັນເຈົ້າຄືພຣະເຈົ້າຂອງຂ້າພະເຈົ້າ"

## 14 ເຢຣູຊາເລັມແລະປະຊາຊາດຕ່າງໆ

Future Warfare and Final Victory

**(ອຊກ 38-39; ມຣກ 13; ພນມ 20-22)**

1 ເບິ່ງແມ ວັນແຫ່ງພຣະຜູ້ເປັນເຈົ້າມາເຖິງແລ້ວ ເມື່ອຊັບສິນທີ່ເຂົາຍຶດໄປຈາກເຈົ້ານັ້ນ ເຂົາຈະແບ່ງກັນຖ້າມ
ກາງເຈົ້າ
2 ເພາະເຮົາຈະຮວບຮວມປະຊາຊາດທັງຫລາຍໃຫ້ທຳເສິກກັບເຢຣູຊາເລັມ ເມືອງນັ້ນຈະຖືກຍຶດ ເຂົາຈະປຸ້ນ
ເອົາຊັບໃນເຮືອນແລະຂົ່ມຂືນຜູ້ຍິງ ພົລເມືອງເຄິ່ງນຶ່ງຈະຕົກໄປເປັນຊະເລີຍ ປະຊາຊົນສ່ວນທີ່ເຫລືອຢູ່ຈະບໍ່
ຖືກຕັດອອກເສັຽຈາກເມືອງ
3 ແລ້ວພຣະຜູ້ເປັນເຈົ້າຈະສະເດັດອອກໄປຕໍ່ສູ້ກັບປະຊາຊາດເຫລົ່ານັ້ນເຫມືອນເມື່ອພຣະອົງຊົງຕໍ່ສູ້ໃນວັນສົງ
ຄາມ
4 ໃນວັນນັ້ນພຣະບາດຂອງພຣະອົງຈະຢືນຢູ່ທີ່ພູເຂົາຫມາກກອກເທດ ຊຶ່ງຢູ່ຫນ້າເມືອງເຢຣູຊາເລັມດ້ານຕາ
ເວັນອອກ ແລະພູເຂົາຫມາກກອກເທດນັ້ນຈະແຍກອອກເປັນສອງສ່ວນຈາກທິດຕາເວັນອອກໄປທິດຕາເວັນ
ຕົກ ໂດຍມີຮ່ອມພູອັນກວ້າງຂວາງຢູ່ຫວ່າງກາງ ພູເຂົາເຄິ່ງນຶ່ງຈຶ່ງຈະເຄື່ອນໄປທາງເຫນືອ ແລະອີກເຄິ່ງນຶ່ງ
ຈະເຄື່ອນໄປທາງໃຕ້
5 ແລະຮ່ອມພູແຫ່ງບັນດາພູເຂົາຂອງເຮົານັ້ນຈະຖືກກັ້ນເສັຽ ເພາະວ່າຮ່ອມພູແຫ່ງບັນດາພູເຂົາຈະມາເຖິງອາ
ຊານ ແລະທ່ານທັງຫລາຍຈະຕ້ອງຫນີໄປ ຢ່າງທີ່ຫນີຈາກແຜ່ນດິນໄຫວສມັຍອຸສຊີຢາກະສັດປະເທດຢູດາ
ແລ້ວພຣະຜູ້ເປັນເຈົ້າພຣະເຈົ້າຂອງເຮົາຈະສະເດັດມາ ແລະຝູງທູດສວັນຈະມາກັບພຣະອົງ
6 ໃນວັນນັ້ນຈະບໍ່ມີຄວາມຫນາວແລະນ້ຳໝອກກ້າມ

7 ຈະມີແຕ່ວັນ (ພຣະຜູ້ເປັນເຈົ້າຊົງຊາບ) ບໍ່ແມ່ນກາງວັນສລັບກາງຄືນ ແຕ່ເວລາຄໍ່າຈະມີແສງສວ່າງ
8 ໃນວັນນັ້ນນໍ້າພູຈະໄຫລອອກຈາກເຢຣູຊາເລັມ ເຄິ່ງນຶ່ງຈະໄຫລໄປສູ່ທະເລດ້ານຕາເວັນອອກ ແລະເຄິ່ງນຶ່ງຈະ
ໄຫລໄປ ສູ່ທະເລດ້ານຕາເວັນຕົກ ໃນຣະດູຮ້ອນກໍຈະໄຫລເລື້ອຍໄປດັ່ງໃນຣະດູຫນາວ
9 ແລະພຣະຜູ້ເປັນເຈົ້າຈະຊົງເປັນກະສັດເຫນືອພິພົບທັງສິ້ນ ໃນວັນນັ້ນພຣະຜູ້ເປັນເຈົ້າຈະຊົງເປັນເອກ ແລະພ
ຣະນາມຂອງພຣະອົງກໍເປັນເອກ
10 ແຜ່ນດິນທັງສິ້ນຈະກາຍເປັນທີ່ຣາບພຽງຈາກເກບາເຖິງຣີມໂມນໃຕ້ເຢຣູຊາເລັມ ແຕ່ເຢຣູຊາເລັມຈະດໍາຣົງ
ສູງເດັ່ນຢູ່ໃນທີ່ຕັ້ງຂອງເມືອງນັ້ນຈາກປະຕູເບັນຢາມິນເຖິງສະຖານທີ່ທີ່ເປັນປະຕູເກົ່າ ເຖິງປະຕູແຈ ແລະຈາກ
ຫໍຄອຍຮານານເອນເຖິງບໍ່ຢໍ່າອະງຸ່ນຂອງກະສັດ
11 ແລະຈະມີຜູ້ຄົນອາສັຍຢູ່ເພາະບໍມີຄໍາສາບແຊ່ງອີກແລ້ວ ເຢຣູຊາເລັມຈະຢູ່ຢ່າງປອດພັຍ
12 ຕໍ່ໄປນີ້ເປັນພັຍວິບັດຊຶ່ງພຣະຜູ້ເປັນເຈົ້າຈະຊົງໃຊ້ໂຈມຕີບັນດາຊົນຊາດທັງຫລາຍທີ່ທໍາສົງຄາມກັບເຢຣູຊາ
ເລັມ ຄືຊີ້ນ ຂອງເຂົາຈະເນົ່າໄປເມື່ອເຂົາຍັງຢືນຢູ່ໄດ້ ຕາຂອງເຂົາຈະເນົ່າຄາເບົ້າຕາ ແລະລີ້ນຂອງເຂົາຈະ
ເນົ່າຄາປາກ
13 ໃນວັນນັ້ນ ການສັບສົນວຸ້ນວາຍຢ່າງໃຫຍ່ໂຕຈາກພຣະຜູ້ເປັນເຈົ້າຈະຕົກລົງເຫນືອເຂົາທັງຫລາຍ ເພາະສະ
ນັ້ນຄົນນຶ່ງຈະຈັບຄຸມເພື່ອນຂອງຕົນ ແລະເຂົາຈະຍົກມືຂຶ້ນຕໍ່ສູ້ກັນແລະກັນ
14 ແມ່ນວ່າຢູດາກໍຈະຕໍ່ສູ້ກັນທີ່ເຢຣູຊາເລັມ ຊັບສົມບັດຂອງປະຊາຊົນທັງສິ້ນທີ່ຢູ່ລ້ອມຮອບຈະຖືກເກັບ ມີທອງ
ຄໍາ ເງິນ ແລະເສື້ອຜ້າຫລວງຫລາຍ
15 ແລະພັຍວິບັດຢ່າງນຶ່ງທີ່ເຫມືອນພັຍວິບັດຢ່າງນີ້ຈະບັງເກີດແກ່ມ້າ ລໍ ອູດ ແລະລາ ແລະບໍ່ວ່າສັດຊະນິດໃດຊຶ່ງ
ມີຢູ່ໃນຄ້າຍເຫລົ່ານັ້ນ
16 ແລະຢູ່ມາບັນດາຄົນທີ່ເຫລືອຢູ່ໃນປະຊາຊາດທັງປວງຊຶ່ງຍົກຂຶ້ນມາສູ້ຮົບກັບເຢຣູຊາເລັມ ຈະຂຶ້ນໄປນະມັສ
ການກະສັດປີແລ້ວປີເລົ່າ ຄືພຣະຜູ້ເປັນເຈົ້າຈອມໂຍທາ ແລະຈະຖືເທສການປຸກຕູບຢູ່
17 ຖ້າຕະກູນໃດໃນພື້ນພິພົບບໍ່ຂຶ້ນໄປຍັງເຢຣູຊາເລັມ ເພື່ອນະມັສາການກະສັດຄືພຣະຜູ້ເປັນເຈົ້າຈອມໂຍທາ
ຝົນກໍຈະບໍ່ຕົກເຫນືອເຂົາເຫລົ່ານັ້ນ
18 ແລະຖ້າຕະກູນເອຢິບບໍ່ຂຶ້ນມາປາກົດຕົວທີ່ນັ້ນ ເຂົາກໍຈະບັງເກີດພັຍວິບັດບໍ່ເຫມືອນພັຍວິບັດຊຶ່ງພຣະຜູ້ເປັນ
ເຈົ້າຊົງໃຊ້ໂຈມຕີປະຊາຊາດອື່ນໆ ຊຶ່ງບໍ່ຂຶ້ນໄປຖືເທສການປຸກຕູບຢູ່
19 ທີ່ກ່າວນີ້ຈະເປັນການລົງໂທດເອຢິບ ແລະປະຊາຊາດທັງສິ້ນ ຊຶ່ງບໍ່ຂຶ້ນໄປຖືເທສການປຸກຕູບຢູ່
20 ແລະໃນວັນນັ້ນໂສ້ທີ່ຜູກມ້າຈະມີຄໍາຈາຣຶກວ່າ “ບໍຣິສຸດແດ່ພຣະຜູ້ເປັນເຈົ້າ” ແລະຫມໍ້ຊຶ່ງຢູ່ໃນພຣະວິຫານ
ຂອງພຣະຜູ້ເປັນເຈົ້າຈະເປັນເຫມືອນຊາມຊຶ່ງຢູ່ຫນ້າແທ່ນບູຊາ
21 ແລະຫມໍ້ທຸກຫນ່ວຍໃນເຢຣູຊາເລັມແລະຢູດາ ຈະເປັນຂອງບໍຣິສຸດແດ່ພຣະຜູ້ເປັນເຈົ້າຈອມໂຍທາ ເພື່ອວ່າ
ທຸກຄົນທີ່ມາຖວາຍສັດບູຊາຈະເອົາຫມໍ້ໄປ ແລະຈະຕົ້ມຊີ້ນໃນຫມໍ້ເຫລົ່ານັ້ນ ໃນວັນນັ້ນຈະບໍ່ມີພໍ່ຄ້າໃນພຣະວິ
ຫານຂອງພຣະຜູ້ເປັນເຈົ້າຈອມໂຍທາອີກຕໍ່ໄປ